ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ກະຊວງແຜນການ ແລະ ການລົງທຶນ

ອົງການຮ່ວມມືສາກົນ ຍີ່ປຸ່ນ( ໄຈກາ )

ອົງການໄຈກາ, ການຮ່ວມມືທາງດ້ານວິຊາການ

ສ ປ ປ ລາວ

ໂຄງການຍົກລະດັບຄວາມສາມາດໃນການຄຸ້ມຄອງການລົງທຶນລັດ ( ພີແຄັບ 2 )

# ບົດລາຍງານປະຈຳປີ

*( ປີທີ ໜຶ່ງ )*

ສິງຫາ 2008

ໄອຊີແນັດ ຈຳກັດ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ການຮ່ວມມືທາງດ້ານວິຊາການ ຂອງ ໄຈກາ

ໂຄງການຍົກລະດັບຄວາມສາມາດໃນການຄຸ້ມຄອງການລົງທຶນລັດ ( ພິແສັບ 2 )

ບົດລາຍງານປະຈຳປີ ທີ 1

**<u>ສາລະບານເນື້ອໃນ</u>**

ໂຄງຮ່າງຂອງບົດລາຍງານ


ໂຄງຮ່າງຂອງບົດລາຍງານ ........ 1

ໂຄງຮ່າງລວມຂອງບົດລາຍງານສະບັບນີ້ ມີດັ່ງລຸ່ມນີ້ : ........ 1

1. ຄວາມໜ້າຂອງການຈັດຕັ້ງປະຕິບັດໂຄງການ ........ 2

1.1 ໜ້າວຽກຂອງບັນດາກິດຈະກຳ ........ 2

**1.2 ເນື້ອໃນຂອງບັນດາກິດຈະກຳ** ........ 4

(1) ບົດລາຍງານການກະກຽມເບື້ອງຕົ້ນ ........ 4

(2) ການສຳຫຼວດຂໍ້ມູນເບື້ອງຕົ້ນ. ........ 4

(3) ສຳມະນາ ........ 5

(4) ກອງປະຊຸມຄະນະກຳມະການປະສານງານຮ່ວມ (JCC) ........ 5

(5) ກິດຈະກຳສຳລັບການຝຶກອົບຮົມ ແລະ ການຝຶກກັບໜ້າວຽກ [ໝາກຜົນ 1]........ 6

(6) ບັນດາກິດຈະກຳສຳລັບການຄຸ້ມຄອງງົບປະມານ ແລະ ການເງິນ ຂອງການລົງທຶນລັດ [ໝາກຜົນ 2]12

(7) ບັນດາກິດຈະກຳທີ່ສະໜັບສະໜູນທາງດ້ານການໃຫ້ຄຳປຶກສາຕໍ່ກົດໝາຍການຄຸ້ມຄອງການລົງທຶນ

ລັດ[ໝາກຜົນ 3]............................................................................................................ 16

(8) ບັນດາກິດຈະກຳ ສຳລັບການປັບປຸງບັນດາວິທີການໃນການຄຸ້ມຄອງການລົງທຶນລັດດ[ໝາກຜົນ 4]..

................................................................................................................................ 17

(9) ອື່ນໆ ......................................................................................................................... 19

**1.3 ໂຄງຮ່າງ ແລະ ເຫດຜົນຂອງການປ່ຽນແປງຢູ່ໃນບັນດາກິດຈະກຳສົມທຽບໃສ່ແຜນເບື້ອງຕົ້ນ**............. 19

**1.4 ບັນດາປະເດັນທີ່ຈະຕ້ອງໄດ້ຮັບການພິຈາລະນາ** .................................................................... 20

**1.5 ການສົ່ງຊ່ຽວຊານຍີ່ປຸ່ນມາເຮັດວຽກ**........................................................................................ 22

2. ຄວາມຄືບໜ້າຂອງການບັນລຸຈຸດປະສົງໂຄງການ. ......................................................................... 23

3. ໂຄງຮ່າງຂອງການປະຊຸມ ........................................................................................................ 23

4. ອຸປະກອນທີ່ຊື້ມາຮັບໃຊ້ ໃຫ້ແກ່ໂຄງການ..................................................................................... 24

5. ບັນດາເອກະສານທີ່ເກັບກຳໄດ້ ................................................................................................. 24

6. ໜ້າວຽກຕົ້ນຕໍ ທີ່ຈະຕ້ອງໄດ້ສຳເລັດໃນປີ ທີ 2.............................................................................. 25

ເອກະສານຊ້ອນທ້າຍ 1.............................................................................................................. 29

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ການຮ່ວມມືທາງດ້ານວິຊາການ ຂອງ ໄຈກາ

ໂຄງການຍົກລະດັບຄວາມສາມາດໃນການຄຸ້ມຄອງການລົງທຶນລັດ ( ພີແຄັບ 2 )

ບົດລາຍງານປະຈຳປີ ທີ 1

**ຄຳສັບຫຍໍ້**

| | | |
|---|---|---|
| DPI | Provincial Department for Planning and Investment | ພະແນກແຜນການ ແລະ ການລົງທຶນ. |
| GPAR | Governance and Public Administration Reform, UNDP | ໂຄງການປັບປຸງ ແລະ ບູລະນະການປົກຄອງ. |
| JCC | Joint Coordinating Committee | ຄະນະກຳມະການປະສານງານຮ່ວມ. |
| JICA | Japan International Cooperation Agency | ອົງການຮ່ວມມືສາກົນ ຍີ່ປຸ່ນ. |
| MAF | Ministry of Agriculture and Forestry | ກະຊວງກະສິກຳ ແລະ ປ່າໄມ້. |
| MoF | Ministry of Finance | ກະຊວງການເງິນ. |
| MoE | Ministry of Education | ກະຊວງສຶກສາທິການ. |
| MPH | Ministry of Public Health | ກະຊວງສາທາລະນະສຸກ. |
| MPI | Ministry of Planning and Investment | ກະຊວງແຜນການ ແລະ ການລົງທຶນ. |
| MPI-DIC | Department of International Cooperation, MPI | ກົມຮ່ວມມືສາກົນ, ກະຊວງແຜນການ ແລະ ການລົງທຶນ. |
| MPI-DoE | Department of Evaluation, MPI | ກົມປະເມີນຜົນ, ກະຊວງແຜນການ ແລະ ການລົງທຶນ. |
| MPI-DoP | Department of Planning, MPI | ກົມແຜນການ, ກະຊວງແຜນການ ແລະ ການລົງທຶນ. |
| MPWT | Ministry of Public Works and Transpor | ກະຊວງໂຍທາທິການ ແລະ ຂົນສົ່ງ. |
| NSEDP | National-Socio-Economic Development Plan | ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ. |
| ODA | Official Development | ການຊ່ວຍເຫຼືອທາງການດ້ານການພັດທະນາ. |

| | | |
|---|---|---|
| | Assistance | |
| OJT | On the Job Training | ການຝຶກກັບໜ້າວຽກ. |
| PCAP | Project for Capacity Building in PIP Management | ໂຄງການເສີມສ້າງຄວາມສາມາດໃນການຄຸ້ມຄອງການລົງທຶນລັດ. |
| PCAP2 | Project for Enhancing Capacity in PIP Management | ໂຄງການຍົກລະດັບຄວາມສາມາດໃນການຄຸ້ມຄອງການລົງທຶນລັດ. |
| PIP | Public Investment Program | ແຜນງານການລົງທຶນລັດ. |
| PO | Project Owner | ເຈົ້າຂອງໂຄງການ. |
| SOP | Standard Operating Procedure | ໂຄງການເສີມສ້າງຄວາມອາດສາມາດໃນການຄຸ້ມຄອງໂຄງການ ແລະ ປັບປຸງການຄຸ້ມຄອງການເງິນ |
| SPAS | Simplified Project Assessment Sheet | ແຜ່ນປະເມີນໂຄງການ ແບບກະທັດຮັດ. |
| UNDP | United Nations Development Programme | ອົງການສະຫະປະຊາຊາດເພື່ອການພັດທະນາ. |

**ໂຄງຮ່າງຂອງບົດລາຍງານ**

ໂຄງຮ່າງລວມຂອງບົດລາຍງານສະບັບນີ້ ມີດັ່ງລຸ່ມນີ້ :

| | |
|---|---|
| 1. ຄວາມຄືບໜ້າຂອງການຈັດຕັ້ງປະຕິບັດໂຄງການ | ຄວາມຄືບໜ້າຂອງບັນດາກິດຈະກຳທີ່ໄດ້ປະຕິບັດ ໃນປີ ທີ 1 ຂອງໂຄງການ ແຕ່ໄລຍະເວລາ ເດືອນ ມີນາ ຫາ ເດືອນ ສິງຫາ 2008. ບັນດາກິດຈະກຳໄດ້ສຸມໃສ່ ການສຶກສາເຖິງໝາກຜົນຂອງໄລຍະຜ່ານມາ (ພີແຄັບ) ພ້ອມກັບບັນດາສະພາບແວດລ້ອມທີ່ສະທ້ອນຕໍ່ການຄຸ້ມຄອງການລົງທຶນລັດ. |
| 2. ຄວາມຄືບໜ້າຂອງການບັນລຸຈຸດປະສົງໂຄງການ | ຄວາມຄືບໜ້າຂອງການບັນລຸຈຸດປະສົງຂອງໂຄງການ ແລະ ຄວາມເປັນໄປໄດ້ຂອງມັນ. |
| 3. ໂຄງຮ່າງຂອງການປະຊຸມ | ດຳເນີນກອງປະຊຸມສຳມະນາເປີດຕົວໂຄງການ ແລະ ກອງປະຊຸມຄະນະກຳມະການປະສານງານຮ່ວມ ຫຼື JCC ຄັ້ງທີ 1 ໃນວັນທີ 21 ພຶດສະພາ 2008. |
| 4.ອຸປະກອນທີ່ຊື້ມາຮັບໃຊ້ໃຫ້ແກ່ໂຄງການ. | ອຸປະກອນທີ່ຊື້ ແລະ ນຳໃຊ້ ສຳລັບໂຄງການ ແມ່ນຄືດັ່ງທີ່ ລະບຸໄວ້ໃນ ບົດລາຍງານສະບັບນີ້. |
| 5. ບັນດາເອກະສານທີ່ເກັບກຳໄດ້ | ເອກະສານທີ່ທ້ອນໂຮມໄດ້ເພື່ອຈຸດປະສົງສຶກສາໂຄງການ ຄືດັ່ງທີ່ລະບຸໄວ້ໃນບົດລາຍງານສະບັບນີ້. |
| 6. ໜ້າວຽກຕົ້ນຕໍທີ່ຈະຕ້ອງໄດ້ສຳເລັດໃນປີທີ 2 . | ໂຄງຮ່າງສຳລັບໜ້າວຽກຕົ້ນຕໍທີ່ໄດ້ວາງແຜນໄວ້ ສຳລັບປີ ທີ 2 ລວມທັງບາງຈຸດທີ່ຮຽກຮ້ອງໃຫ້ມີການເອົາໃຈໃສ່ເປັນພິເສດ. |

## 1. ຄວາມໜ້າຂອງການຈັດຕັ້ງປະຕິບັດໂຄງການ

### 1.1 ໜ້າວຽກຂອງບັນດາກິດຈະກຳ

ໜ້າວຽກຂອງກິດຈະກຳໂຄງການທີ່ໄດ້ດຳເນີນ ມີດັ່ງລຸ່ມນີ້ ;

| ລາຍການ | ບັນດາກິດຈະກຳທີ່ໄດ້ດຳເນີນໃນປີທີທຳອິດ |
|---|---|
| (1) ບົດລາຍງານການກະກຽມເບື້ອງຕົ້ນ | 1) ເກັບກຳແລະວິເຄາະຂໍ້ມູນ.<br>2) ສຳເລັດ ແລະ ການຍື່ນບົດລາຍງານການກະກຽມເບື້ອງຕົ້ນ. |
| (2) ການສຳຫຼວດເບື້ອງຕົ້ນ | 1) ການສຳຫຼວດຂໍ້ມູນເບື້ອງຕົ້ນ ແລະ ການວິເຄາະຂໍ້ມູນ. |
| (3) ສຳມະນາ | 1) ກອງປະຊຸມສຳມະນາເປີດຕົວທີ່ນະຄອນຫຼວງວຽງຈັນ. |
| (4) ກອງປະຊຸມຄະນະກຳມະການປະສານງານຮ່ວມ (JCC) | 1) ກອງປະຊຸມຄະນະກຳມະການປະສານງານຮ່ວມຄັ້ງທີ 1 |
| (5) ບັນດາກິດຈະກຳສຳລັບການຝຶກອົບຮົມ ແລະ ການຝຶກກັບໜ້າວຽກ [ໝາກຜົນ 1] | 1) ການຝຶກກັບໜ້າວຽກໃຫ້ແກ່ ກະຊວງແຜນການ ແລະການລົງທຶນ.<br>2) ການປະເມີນ, ການຕິດຕາມກວດກາ ແລະ ການປະເມີນຜົນໂຄງ ການລົງທຶນ ລັດ.<br>3) ໃຫ້ຄຳຄິດເຫັນກັບຄືນກ່ຽວກັບຜົນຂອງການຝຶກກັບໜ້າວຽກ ຕໍ່ 3 ແຂວງເປົ້າ ໝາຍຂອງ ພີແຄັບ.<br>4) ການພັດທະນາໂປຼແກຼມການຝຶກອົບຮົມສຳລັບປີຕໍ່ໆໄປ.<br>5) ການຝຶກອົບຮົມໃຫ້ແກ່ຄູຝຶກ. |
| (6) ບັນດາກິດຈະກຳສຳລັບການຄຸ້ມຄອງງົບປະມານ ແລະ ການເງິນໂຄງການການລົງທຶນລັດ [ໝາກຜົນ2] | |
| (6)-1 ການຈັດສັນງົບປະມານການລົງທຶນລັດ | 1) ການສຶກສາລະບົບການຈັດສັນງົບປະມານການລົງທຶນລັດທີ່ດຳເນີນຢູ່ໃນປະຈຸ ບັນ. |
| (6)-2 ການເບີກຈ່າຍງົບປະມານ ແລະ ການຄຸ້ມຄອງການເງິນໂຄງການລົງທຶນລັດ. | 1) ການສຶກສາເຖິງການຄຸ້ມຄອງການເງິນ ແລະ ການເບີກຈ່າຍງົບປະມານການລົງທຶນລັດ. |
| (7) ບັນດາກິດຈະກຳຂອງການໃຫ້ຄຳປຶກສາຕໍ່ການຮ່າງກົດໝາຍການຄຸ້ມຄອງການລົງທຶນລັດ [ໝາກຜົນ 3] . | 1) ທົບທວນຄືນກອບນິຕິກຳ ແລະ ໃຫ້ຄຳແນະນຳຕໍ່ການຮ່າງກົດໝາຍການລົງ ທຶນລັດ.<br>2) ການຝຶກອົບຮົມຢູ່ປະເທດທີ່ສາມ ທີ່ ຫວຽດນາມ. |
| (8) ບັນດາກິດຈະກຳສຳລັບການປັບປຸງວິທີການການຄຸ້ມຄອງການລົງທຶນລັດ [ໝາກຜົນ 4] | |

| | | |
|---|---|---|
| | (8)-1 ການຄຸ້ມຄອງທຶນສົມທົບ ODA. | 1 ) ສຶກສາເຖິງການຄຸ້ມຄອງໂຄງການ ODA ໃນປະຈຸບັນ. |
| | (8)-2 ການຄຸ້ມຄອງໂຄງການລົງທຶນລັດ ຢູ່ຂັ້ນເມືອງ. | 1 ) ສຶກສາເຖິງຂັ້ນຕອນຂອງວຽກ ແລະ ລະດັບຄວາມສາມາດ ຂອງ ຫ້ອງການແຜນ ການ ແລະ ສະຖິຕິຂອງເມືອງ. |
| | (8)-3 ການຄຸ້ມຄອງແຜນງານ. | 1) ທົບທວນຄືນແຜນດຳເນີນງານ.<br>2) ການກະກຽມໃຫ້ແກ່ການຮ່າງແຜນງານທົດລອງ. |
| (9) ອື່ນໆ | | 1) ຄວາມເປັນໄປໄດ້ຂອງການຮ່ວມມືກັບບັນດາໂຄງການຂອງຜູ້ໃຫ້ທຶນອື່ນໆ. |

## 1.2 ເນື້ອໃນຂອງບັນດາກິດຈະກຳ

ບັນດາເນື້ອໃນຂອງບັນດາກິດຈະກຳທີ່ໄດ້ດຳເນີນ ມີດັ່ງລຸ່ມນີ້ :

### (1) ບົດລາຍງານການກະກຽມເບື້ອງຕົ້ນ

ກ່ອນອື່ນໝົດ, ພວກເຮົາກວດກາຄືນເບິ່ງບັນດາໝາກຜົນທີ່ໄດ້ຮັບຈາກ ໄລຍະທີ່ໜຶ່ງຂອງໂຄງການ ( ໂຄງການເສີມສ້າງຄວາມອາດສາມາດໃນການຄຸ້ມຄອງໂຄງການໃນແຜນງານການລົງທຶນລັດ ) ແລ້ວສັງລວມເອົາບັນດາວິທີການທີ່ຈະນຳໃຊ້ ແລະ ຄວາມສາມາດທີ່ຄວນຕ້ອງໄດ້ຮັບການພັດທະນາ ເພື່ອຮັບໃຊ້ໃຫ້ແກ່ການສືບຕໍ່ປັບປຸງວຽກງານການຄຸ້ມຄອງການລົງທຶນລັດໃນຕໍ່ໜ້າ. ຫຼັງຈາກນັ້ນ ໄດ້ສຶກສາເຖິງບັນດາຂັ້ນຕອນທີ່ເປັນໄປໄດ້ຂອງບັນດາກິດຈະກຳ ແລະ ຄວາມຈຳເປັນ ໃນການດຳເນີນຂອງພວກມັນ ເພື່ອເຮັດໃຫ້ໂຄງການດັ່ງກ່າວບັນລຸຜົນສຳເລັດ ( ໂຄງການຍົກລະດັບຄວາມສາມາດໃນການຄຸ້ມຄອງການລົງທຶນລັດ-ພີແຄັບ 2 ). ເນື້ອໃນດັ່ງກ່າວໄດ້ຖືກສັງລວມເຂົ້າໃຫ້ເປັນຮ່າງບົດລາຍງານການກະກຽມເບື້ອງຕົ້ນ, ເຊິ່ງ ມີ 3 ພາສາ ຄື : ລາວ, ອັງກິດ ແລະ ຍີ່ປຸ່ນ.

ຮ່າງບົດລາຍງານການກະກຽມເບື້ອງຕົ້ນ ໄດ້ຖືກສົ່ງໃຫ້ ອົງການ ໄຈກາ ປະຈຳລາວ ແລະ ກະຊວງແຜນການ ແລະ ການລົງທຶນ, ເຊິ່ງແມ່ນອົງການຮ່ວມງານກັບ ພີແຄັບ 2 ເພື່ອຜ່ານເນື້ອໃນ. ຫຼັງຈາກ ໄດ້ຮັບຄຳຄິດເຫັນແລ້ວ ຈຶ່ງໄດ້ຈັດພິມ ແລະ ແຈກຢາຍໄປສູ່ບັນດາອົງການຈັດຕັ້ງທີ່ກ່ຽວຂ້ອງ. ນອກຈາກນັ້ນແລ້ວ ບົດລາຍງານດັ່ງກ່າວ ຍັງໄດ້ສົ່ງໃຫ້ບັນດາກະຊວງ ແລະ ບັນດາຜູ້ໃຫ້ທຶນອື່ນໆ ເພື່ອເປັນການແຈ້ງໃຫ້ຊາບກ່ຽວກັບໂຄງການດັ່ງກ່າວ.

### (2) ການສຳຫຼວດຂໍ້ມູນເບື້ອງຕົ້ນ.

ການສຳຫຼວດຂໍ້ມູນເບື້ອງຕົ້ນ ໄດ້ດຳເນີນເພື່ອການຊອກຫາ ບັນດາຕົວຊີ້ບອກ ແລະ ພື້ນຖານຂອງມັນ ເພື່ອວັດແທກ ແລະ ປະເມີນລະດັບທີ່ຕ້ອງການເພື່ອບັນລຸເປົ້າໝາຍລວມຂອງໂຄງການ ພີແຄັບ 2 “ ບັນດາກົມຢູ່ຂັ້ນກະຊວງ ແລະ ພະແນກຢູ່ຂັ້ນແຂວງ ຈັດຕັ້ງປະຕິບັດໂຄງການລົງທຶນລັດຢ່າງມີປະສິດທິພາບ ແລະ ປະສິດທິຜົນ, ທັນກຳນົດເວລາ ແລະ ເປັນໄປຕາມການບໍລິຫານງົບປະມານທີ່ວາງແຜນໄວ້ ພາຍໃຕ້ແຜນງານຂອງຂະແໜງການ “.

ແຫຼ່ງທີ່ສຳຄັນສຳລັບການສຳຫຼວດຂໍ້ມູນເບື້ອງຕົ້ນ ແມ່ນ : *ກ.* ບັນດາຜົນໄດ້ຮັບຈາກການເບີກຈ່າຍງົບປະມານຂອງ ປີ 2007/2008 ( ໄລຍະເວລາ ລະຫວ່າງ ເດືອນ ຕຸລາ 2007 ຫາ ເດືອນ ກັນຍາ 2008, *ຂ.* ແຜນງົບປະມານ ສຳລັບປີ 2008/2009 ແລະ *ຄ.* ບົດທົບທວນໄລຍະກາງ ສຳລັບແຜນພັດທະນາເສດຖະກິດ-ສັງຄົມ 5 ປີຄັ້ງທີ 6, 2006-2010.

ອີງໃສ່ຄວາມຄາດຫວັງວ່າ ຂໍ້ມູນດັ່ງກ່າວຈະໄດ້ຮັບການບັນລຸ, ຕໍ່ໄປນີ້ ແມ່ນການອະທິບາຍເຖິງຫົວຂໍ້ ທີ່ຈະຕ້ອງໄດ້ສືບຕໍ່ສຶກສາ;

| ບັນດາຕົວຊີ້ບອກເຖິງເປົ້າໝາຍລວມ | ຫົວຂໍ້ ແລະ ວິທີທາງຂອງການສຶກສາ |
|---|---|
| ຈຳນວນ ແລະ ອັດຕາສ່ວນຂອງໂຄງການທີ່ໃຊ້ງົບປະມານພາຍໃນ ແລະ ໂຄງການ ODA ທີ່ບໍ່ໄດ້ສືບຕໍ່ ຫຼື ໂຈະ ຍ້ອນບັນຫາງົບປະມານ ລົດລົງ. | ✧ ທຽບໃສ່ ສະຖານະພາບຂອງຂອງໂຄງການລົງທຶນລັດທີ່ແກ່ຍາວ ຫຼື ໂຈະຢູ່ໃນສົກປີງົບປະມານ 2007/2008 ແລະລາຍການຈ່າຍຕົວຈິງ. ວິເຄາະເບິ່ງສາເຫດ ຂອງການແກ່ຍາວ ຫຼື ໂຈະ. |
| ຈຳນວນ ແລະ ອັດຕາສ່ວນຂອງໂຄງການທີ່ໃຊ້ງົບປະມານພາຍໃນ ແລະ ໂຄງການ ODA ທີ່ບໍ່ໄດ້ຮັບການບຳລຸງຮັກສາເປັນຢ່າງດີ ຫຼື ບໍ່ໄດ້ຮັບການບຳລຸງຮັກສາເລີຍ ລົດລົງ. | ✧ ບັນລຸບັນຊີລາຍຊື່ໂຄງການລົງທຶນລັດ ທີ່ໄດ້ສຳເລັດ ແລະ ມອບໂອນເພື່ອການນຳໃຊ້ ໃນ 10 ປີຜ່ານມາ.<br>✧ ສ້າງບັນຊີລາຍຊື່ຂອງໂຄງການທີ່ຈະສຳເລັດໃນສົກປີ 2007/2008 ( ຈະຖືກນຳໃຊ້ເພື່ອກວດສອບວ່າ ໃນເວລາທີ່ເຮັດການປະເມີນພາຍຫຼັງ ໂຄງການສຳເລັດໄປແລ້ວໄລຍະເວລາໃດໜຶ່ງ, ການນຳໃຊ້ ແລະ ການບຳລຸງຮັກສາ ໄດ້ຖືກຈັດຕັ້ງປະຕິບັດຢ່າງເໝາະສົມບໍ່ ) |
| ຈຳນວນ ແລະ ອັດຕາສ່ວນຂອງໂຄງການທີ່ໃຊ້ງົບປະມານພາຍໃນ ແລະ ໂຄງການ ODA ທີ່ບໍ່ໄດ້ນຳໃຊ້ ລົດລົງ. | ✧ ບັນລຸບັນຊີລາຍຊື່ໂຄງການລົງທຶນລັດ ທີ່ໄດ້ສຳເລັດ ແລະ ມອບໂອນເພື່ອການນຳໃຊ້ ໃນ 10 ປີຜ່ານມາ.<br>✧ ສ້າງບັນຊີລາຍຊື່ຂອງໂຄງການທີ່ຈະສຳເລັດໃນສົກປີ 2007/2008 ( ຈະຖືກນຳໃຊ້ເພື່ອກວດສອບວ່າ ໃນເວລາທີ່ເຮັດການປະເມີນພາຍຫຼັງໂຄງການສຳເລັດໄປແລ້ວໄລຍະເວລາໃດໜຶ່ງ, ການນຳໃຊ້ ແລະ ການບຳລຸງຮັກສາ ໄດ້ຖືກຈັດຕັ້ງປະຕິບັດຢ່າງເໝາະສົມບໍ່ ) |
| ຈຳນວນ ແລະ ອັດຕາສ່ວນຂອງໂຄງການທີ່ໃຊ້ງົບປະມານພາຍໃນ ແລະ ໂຄງການ ODA ທີ່ມີການປ່ຽນແປງບຸກຄົນຮັບຜິດຊອບ ຫຼື ບໍລິສັດຮັບເໝົາກໍ່ສ້າງຢ່າງບໍ່ໄດ້ຄາດໄວ້ກ່ອນ ລົດລົງ. | ✧ ຊອກໃຫ້ເຫັນຈຳນວນໂຄງການລົງທຶນລັດທີ່ແກ່ຍາວ ຫຼື ໂຈະ ຍ້ອນການປ່ຽນແປງບຸກຄົນ ຫຼື ບໍລິສັດຮັບເໝົາກໍ່ສ້າງ ຢູ່ໃນບັນຊີລາຍຊື່ໂຄງການ ສົກປີ 2007/2008. |
| **ຕົວຊີ້ບອກທີ່ຈະຕ້ອງໄດ້ສືບຕໍ່ສຶກສາ** | **ຫົວຂໍ້ ແລະ ວິທີທາງການສຶກສາ** |
| ຈຳນວນແລະອັດຕາສ່ວນຂອງໂຄງການລົງທຶນລັດທີ່ສຳເລັດຕາມແຜນທີ່ວາງໄວ້. | ✧ ວິເຄາະຈຳນວນຂອງໂຄງການລົງທຶນລັດ ທີ່ສຳເລັດຕາມແຜນທີ່ວາງໄວ້, ສົມທຽບໃສ່ຈຳນວນໂຄງການທັງໝົດທີ່ສຳເລັດໃນສົກປີງົບ ປະມານ 2007/2008 ແລະ 2008/2009. |
| ຈຳນວນ ແລະ ອັດຕາສ່ວນຂອງໂຄງການລົງທຶນລັດທີ່ມີການວັດແທກເຖິງຜົນກະທົບດ້ານບວກ ຫຼັງຈາກໂຄງ ການສຳເລັດ. | ✧ ວິເຄາະບົດທົບທວນຄືນກາງສະໄໝຂອງ NSEDP 2006-2010 ແລະ ໂຄງການລົງທຶນລັດທີ່ສຳເລັດ ມາຮອດສົກປີ 2007/2008. |

## (3) ສຳມະນາ

ອ້າງອີງເຖິງ "ຂໍ້ 3 . ໂຄງປະກອບຂອງການປະຊຸມ, (1) ສຳມະນາເປີດຕົວໂຄງການ"

## (4) ກອງປະຊຸມຄະນະກຳມະການປະສານງານຮ່ວມ (JCC)

ອ້າງອີງເຖິງ " ຂໍ້ທີ 3. ໂຄງປະກອບຂອງການປະຊຸມ, (2) ກອງປະຊຸມຄະນະກຳມະການປະສານງານຮ່ວມ

## (5) ກິດຈະກຳສຳລັບການຝຶກອົບຮົມ ແລະ ການຝຶກກັບໜ້າວຽກ [ໝາກຜົນ 1]

### 1) ການຝຶກກັບໜ້າວຽກໃຫ້ແກ່ ກະຊວງແຜນການ ແລະ ການລົງທຶນ

#### ✧ ການສຶກສາເຖິງຂັ້ນຕອນໂດຍລວມ ສຳລັບແຜນງົບປະມານການລົງທຶນລັດ ສົກປີ 2008/2009

ພວກເຮົາໄດ້ດຳເນີນການສຶກສາເພື່ອເຂົ້າໃຈເຖິງຂັ້ນຕອນລະອຽດ ຂອງການວາງແຜນງົບປະມານການລົງທຶນລັດ ຢູ່ໃນບັນດາພະແນກທີ່ຂື້ນກັບກົມແຜນການ ( ພະແນກວິໃຈເສດຖະກິດມະຫາພາກ, ພະແນກວາງແຜນພັດທະນາເສດຖະກິດ, ພະແນກວາງແຜນພັດທະນາສັງຄົມ, ພະແນກວາງແຜນພັດທະນາທ້ອງຖິ່ນ ແລະ ພະແນກວາງແຜນ ການລຶບລ້າງຄວາມທຸກຍາກ ) ແລະ 2 ພະແນກທີ່ຂື້ນກັບກົມປະເມີນຜົນ ແລະ ວິເຄາະ ຂັ້ນຕອນຂອງ ການສ້າງແຜນງົບປະມານການລົງທຶນລັດ ສົກປີ 2008/2009.

ສະພາບຕົວຈິງລຸ່ມນີ້ ແມ່ນໄດ້ພົບເຫັນ ໃນເວລາດຳເນີນການສຶກສາ;

(a) ການໄຫຼໂດຍລວມຂອງຂັ້ນຕອນໃນການສ້າງແຜນງົບປະມານການລົງທຶນລັດ.

- ➢ ເພດານງົບປະມານການລົງທຶນລັດ ທີ່ໄດ້ມີການຕົກລົງເບື້ອງຕົ້ນ ລະຫວ່າງ ກະຊວງການເງິນ ແລະ ກະຊວງແຜນການ ແລະ ການລົງທຶນຍັງບໍ່ທັນເປັນອັນສຸດທ້າຍ. ອາດມີການປ່ຽນແປງໄດ້ ຫຼັງຈາກການປຶກສາຫາລື ຂອງທັງສອງຝ່າຍ ໃນເດືອນ ສິງຫາ ຂື້ນຢູ່ກັບຜົນໄດ້ຮັບຂອງການເຈລະຈາຂໍງົບປະມານກັບບັນດາແຂວງ ໃນເວລາຕໍ່ມາ, ນອກຈາກນັ້ນແລ້ວ ຈຳນວນໂຄງການບູລິມະສິດຢູ່ຂັ້ນສູນກາງກໍເພີ່ມຂຶ້ນ.
- ➢ ປະຈຸບັນ, ກະຊວງແຜນການ ແລະ ການລົງທຶນ ໄດ້ອະທິບາຍເຖິງການຈັດສັນງົບປະມານການລົງທຶນລັດ ໃຫ້ແກ່ບັນດາແຂວງ ແລະ ກະຊວງ **ຫຼັງຈາກ** ເຂົາເຈົ້າໄດ້ຍື່ນຄຳສະເໜີຂໍງົບຄັ້ງທີ 1. ກະຊວງແຜນການ ແລະ ການລົງທຶນຕັ້ງໃຈ ທີ່ຈະປ່ຽນແປງຂັ້ນຕອນດັ່ງກ່າວ ແລະ ຕັດສິນໃຈ ແລະແຈ້ງການກ່ຽວກັບການຈັດສັນ ກ່ອນການຍື່ນສະເໜີຂໍງົບປະມານ.
- ➢ ໃນເມື່ອ ສສ ຫວຽດນາມ ແລະ ສປ ຈີນ ມີຂັ້ນຕອນທີ່ເປັນລະບົບສຳລັບການວາງແຜນງົບປະມານໂດຍລວມ, ກະຊວງແຜນການ ແລະ ການລົງທຶນ ກໍມີຄວາມຕັ້ງໃຈ ຈະຖອດຖອນບົດຮຽນນຳແບບວິທີຂອງເຂົາເຈົ້າ.

(b) ບົດແນະນຳສຳລັບການສ້າງແຜນງົບປະມານ

- ➢ ບົດແນະນຳສຳລັບການສ້າງແຜນງົບປະມານ ເລກທີ 486/ຜທ ( ອອກວັນທີ 7 ເດືອນ ມີນາ 2008) ແລະ ບົດແນະນຳເພີ່ມເຕີມມີເນື້ອໃນວ່າ ຢູ່ໃນ 111 ໂຄງການ ທີ່ໄດ້ລະບຸຢູ່ໃນ ແຜນປະຕິບັດການ, ມີ 25 ໂຄງການ ທີ່ຖືກເນັ້ນໜັກ ໃຫ້ເປັນໂຄງການທີ່ສຳຄັນທີ່ສຸດ ສຳລັບການຈັດຕັ້ງປະຕິບັດໂຄງການລົງທຶນລັດ ໃນສົກປີ 2008/2009.

(c) ການປະສານສົມທົບ ລະຫວ່າງ ກົມແຜນການ ແລະ ກົມປະເມີນຜົນຂອງກະຊວງແຜນການ ແລະ ການລົງທຶນ

- ➢ ບົດບາດຂອງ ກົມປະເມີນຜົນໃນການເຈລະຈາຕໍ່ລອງກ່ຽວກັບງົບປະມານກັບບັນດາກະຊວງ ແລະ ແຂວງສາມາດເຫັນໄດ້ຊັດເຈນ. ສາມາດເຫັນໄດ້ເຖິງການປະສານສົມທົບ ລະຫວ່າງ ກົມປະເມີນຜົນ ແລະ ກົມແຜນການ ເລີ່ມມີຄວາມ

| |
|---|
| ໃກ້ສິດຂຶ້ນ.<br>➢ ກະຊວງຈຳນວນໜຶ່ງ ໄດ້ເລີ່ມຕົ້ນສົ່ງບົດສະເໜີຂໍງົບປະມານການລົງທຶນລັດມາຜ່ານກົມປະເມີນຜົນຕາມທີ່ໄດ້ແຈ້ງການ, ເຊິ່ງໃນໄລຍະຜ່ານມາ ສ່ວນຫຼາຍແມ່ນສົ່ງໄປຜ່ານກົມແຜນການ. |

✧ **ການສຶກສາການສະເໜີຂໍງົບປະມານການລົງທຶນລັດ ສົກປີ 2008/2009.**

ໄດ້ສຶກສາເຖິງການສະເໜີຂໍງົບປະມານການລົງທຶນລັດທີ່ບັນດາແຂວງໄດ້ສະເໜີມາ. ຈຳນວນຂອງບັນດາໂຄງການທີ່ໄດ້ຮັບການປະເມີນໂດຍພະແນກແຜນການ ແລະ ການລົງທຶນ ໂດຍນຳໃຊ້ແຜ່ນປະເມີນໂຄງການແບບກະທັດຮັດ ໄດ້ຖືກບັນຈຸເຂົ້າ.

## 2) ການປະເມີນຜົນຂອງການປະເມີນໂຄງການລົງທຶນລັດ, ການຕິດຕາມກວດກາ ແລະ ຜົນຂອງການປະເມີນຜົນ

✧ **ການສ້າງຕັ້ງທີມງານຂອງການປະເມີນຜົນຂອງການປະເມີນ**

ບັນດາຜູ້ທີ່ມີລາຍຊື່ລຸ່ມນີ້ ແມ່ນທີມງານຂອງການປະເມີນຜົນຂອງການປະເມີນ ທີ່ໄດ້ຮັບການເຫັນດີຈາກທ່ານ ວິໄຊ ຊາວັນນາ ຫົວໜ້າກົມປະເມີນຜົນ, ຜູ້ບໍລິຫານໂຄງການ ພີແຄັບ 2 .

| | |
|---|---|
| ພະນັກງານກົມປະເມີນຜົນໂຄງການ | ທ່ານ ເພັດອຳພອນ ຮ່ວມບຸນ, ທ່ານ ພຸດປະສົງ ແສງດາລາວົງ, ທ່ານ ສອນເພັດວົງສີ ບຸດພົມເມືອງ, ທ່ານນາງ ອຸດາລອນ ສີໂພວົງ, ທ່ານ ເຊັງເຮີ ລີຈໍ, ທ່ານ ຄຳຜ່ານ ຄຳສະພົງ, ທ່ານນາງ ບຸນມີ ສີຈັນລາ. |
| ພະນັກງານກົມແຜນການ | ທ່ານ ກະລຸນາ ບັນທະວົງດວງສີ |

✧ **ການສຶກສາເຖິງຂັ້ນຕອນການກະກຽມງົບປະມານການລົງທຶນລັດສົກປີ 2008/2009 ຢູ່ຂັ້ນແຂວງ.**

ທີມງານປະເມີນຜົນຂອງການປະເມີນ ໄດ້ເດີນທາງໄປແຂວງ ອຸດົມໄຊ, ເຊິ່ງເປັນແຂວງເປົ້າໝາຍຂອງພີແຄັບ ເພື່ອດຳເນີນການສຶກສາເຖິງຂັ້ນຕອນການກະກຽມງົບປະມານ ຮ່ວມກັບພະແນກແຜນການ ແລະ ການລົງທຶນ ແລະ 3 ພະແນກຂອງຂະແໜງການ.

ໃນໄລຍະການດຳເນີນການສຶກສາ ທີມງານໄດ້ພົບເຫັນຄວາມເປັນຈິງດັ່ງລຸ່ມນີ້ :

| |
|---|
| (a) ຂັ້ນຕອນຂອງການຄຸ້ມຄອງການລົງທຶນລັດ ຢູ່ແຂວງ ອຸດົມໄຊ<br>➢ ພະແນກແຜນການ ແລະ ການລົງທຶນຂອງແຂວງ ອຸດົມໄຊ ໄດ້ຮັບງົບປະມານທັງໝົດ 242 ໂຄງການລົງທຶນລັດ ເຊິ່ງແມ່ນບັດາເຈົ້າຂອງໂຄງການ ຂອງແຕ່ລະພະແນກອ້ອມຂ້າງແຂວງໄດ້ສະເໜີມາໃນລະຫວ່າງ ເດືອນ ມີນາ. ຍ້ອນການສົ່ງບົດລາຍງານຂອງບັນດາພະແນກການອ້ອມຂ້າງມີຄວາມລ່າຊ້າ, ການສົ່ງບົດລາຍງານຂອງພະແນກ |

ແຜນການ ແລະ ການລົງທຶນ ຕໍ່ກະຊວງແຜນການ ແລະ ການລົງທຶນກໍລ່າຊ້າ ເກືອບ 01 ເດືອນ ຈາກກຳນົດເວລາທີ່ໄດ້ລະບຸຢູ່ໄວ້ໃນບົດແນະນຳ.

- ພະນັກງານ 7 ທ່ານ ຈາກ ຂະແໜງປະເມີນຜົນ ແລະ ໃຊ້ເວລາ 01 ເດືອນ ເພື່ອສຳເລັດການປະເມີນໂຄງການທັງໝົດ ແລະ ພະນັກງານ 03 ທ່ານ ຈາກຂະແໜງແຜນການ ໃຊ້ເວລາ 02 ອາທິດ ເພື່ອສຳເລັດການສັງລວມຂໍ້ມູນບັນດາໂຄງການ ແລະ ຮ່າງ ບັນຊີລາຍຊື່ໂຄງການເພື່ອສະເໜີຂໍງົບປະມານ.
- ມີ16 ໂຄງການ ຈາກ 242 ໂຄງການ ໄດ້ຖືກປະຕິເສດ ຍ້ອນບໍ່ມີເອກະສານພຽງພໍ. 226 ໂຄງການທີ່ຍັງເຫຼືອໄດ້ຮັບການປະເມີນໂດຍນຳໃຊ້ແຜ່ນປະເມີນຜົນແບບກະທັດຮັດ ( ສປາດສ) ແລະ 160 ໂຄງການ ໄດ້ຖືກບັນຈຸເຂົ້າບັນຊີລາຍຊື່ສະເໜີຕໍ່ກະຊວງແຜນການແລະການລົງທຶນ ເພື່ອຂໍງົບປະມານ. ອັນນີ້ ໝາຍຄວາມວ່າ ພະນັກງານ 7 ທ່ານຢູ່ຂະແໜງປະເມີນຜົນ ມີຄວາມສາມາດເຮັດວຽກໄດ້ສອງເທົ່າ ເມື່ອທຽບກັບປີຜ່ານມາທີ່ເຮັດໄດ້ 119 ໂຄງການ.

(b) ໝາຍເຫດ

- ສາເຫດທີ່ພາໃຫ້ພະແນກແຜນການ ແລະ ການລົງທຶນຂອງອຸດົມໄຊມີຄວາມສາມາດໃນການຈັດຕັ້ງປະຕິບັດຈຳນວນດັ່ງກ່າວ ແມ່ນຍ້ອນເຂົາເຈົ້ານຳໃຊ້ວິທີການທີ່ເປັນເອກະລັກຂອງເຂົາເຈົ້າເອງ. ໃນປີຜ່ານມາ ພະແນກແຜນການ ແລະການລົງທຶນ ໄດ້ເລືອກເອົາ 3 ໃນ 7 ຕົວເມືອງໃຫ້ເປັນເມືອງເປົ້າໝາຍ ແລະ ສະໜອງການຝຶກອົບຮົມ ດ້ວຍວິທີການແລະ ເຄື່ອງມື ຂອງ ພີແຄັບ . ພະນັກງານຂອງພະແນກແຜນການ ແລະ ການລົງທຶນໄດ້ເປັນຄູຝຶກໃຫ້ແກ່ພະນັກງານຂອງເມືອງ. ເນື້ອໃນຂອງການຝຶກອົບຮົມແມ່ນເນັ້ນໃສ່ ວິທີການຂຽນບົດສະເໜີໂຄງການ ແລະ 5 ມາດຖານຂອງການປະເມີນຜົນ, ທັງໄດ້ຝຶກຕົວຈິງ ແລະ ໃນເວລາດຽວກັນກໍດຳເນີນການຄຸ້ມຄອງໂຄງການລົງທຶນລັດຢູ່ຂັ້ນເມືອງໄປພ້ອມໆກັນ.
- ໃນປີນີ້, ການຝຶກອົບຮົມ ໄດ້ຂະຫຍາຍອອກໄປຕື່ມ 4 ຕົວເມືອງ. ຜົນໄດ້ຮັບ ຄື ໄດ້ມີບົດສະເໜີໂຄງການຈຳນວນຫຼາຍຍິ່ງຂຶ້ນມາ ແລະ ນອກຈາກນັ້ນ, ຄຸນນະພາບ ຂອງການຂຽນບົດສະເໜີໂຄງການ ຂອງ 3 ຕົວເມືອງ ທີ່ໄດ້ຜ່ານການຝຶກອົບຮົມ ໃນປີຜ່ານມາກໍດີຂຶ້ນ.
- ຄ່າໃຊ້ຈ່າຍຂອງການຈັດການຝຶກອົບຮົມໃນຈຳນວນທັງໝົດ 55 ລ້ານກີບ, ໃນນັ້ນ 25 ລ້ານກີບ ແມ່ນພະແນກແຜນການ ແລະ ການລົງທຶນເປັນຜູ້ຮັບຜິດຊອບໂດຍໃຊ້ງົບປະມານປົກກະຕິຂອງແຂວງ. ວິທີການນີ້ ເປັນວິທີການທີ່ດີເພື່ອເຮັດໃຫ້ການຄຸ້ມຄອງການລົງທຶນລັດຢູ່ຂັ້ນເມືອງ ມີຄວາມຍືນຍົງ.

## ✧ ການສຶກສາການປະເມີນຜົນຂອງການປະເມີນຢູ່ບັນດາແຂວງເປົ້າໝາຍ.

ກະຊວງແຜນການ ແລະ ການລົງທຶນ ແລະ ພະແນກແຜນການ ແລະ ການລົງທຶນແຂວງອຸດົມໄຊ ໄດ້ຮ່ວມກັນດຳເນີນການປະເມີນຜົນຂອງການປະເມີນ 12 ໂຄງການລົງທຶນລັດ ທີ່ໄດ້ສະເໜີຂຶ້ນມາຂໍງົບປະມານສົກປີ 2008/2009. ການສຶກສາ ໄດ້ເບິ່ງທັງການປະເມີນຜົນແບບຟອມ ສປາດສ ແລະ ວິທີການ ແລະ ຂັ້ນຕອນທີ່ໃຊ້ ໃນເວລາເຮັດການປະເມີນ. ຜົນໄດ້ຮັບໄດ້ສະແດງໃຫ້ເຫັນວ່າ ຄຸນນະພາບຂອງການປະເມີນແມ່ນໄດ້ຮັບການປັບປຸງດີຂຶ້ນກວ່າເກົ່າ ເມື່ອທຽບກັບປີຜ່ານມາ , ແຕ່ຍັງມີຄວາມຮຽກຮ້ອງໃຫ້ມີການປັບປຸງຕື່ມບາງຢ່າງ.

ຕໍ່ໄປນີ້ ແມ່ນບາງປະເດັນ ທີ່ຄວນໄດ້ຮັບການສືບຕໍ່ພິຈາລະນາຕື່ມ;

- ຂໍ້ມູນພື້ນຖານຈາກເຈົ້າຂອງໂຄງການ ຍັງບໍ່ພຽງພໍທີ່ຈະເຮັດການປະເມີນ.
- ມີບາງກໍລະນີນຳໃຊ້ແບບຟອມ ສປາດສ ບໍ່ຖືກຕ້ອງໃນການປະເມີນ, ຈຶ່ງເຮັດໃຫ້ຜົນການປະເມີນບໍ່ເໝາະສົມ.
- ການມີສ່ວນຮ່ວມ ຂອງຜູ້ມີສ່ວນກ່ຽວຂ້ອງ ເຊັ່ນ : ບັນດາຜູ້ໄດ້ຮັບຜົນປະໂຫຍດ ຍັງຮຽກຮ້ອງໃຫ້ຮັບປະກັນຄວາມໂປ່ງໃສ ແລະ ຄວາມໜ້າເຊື່ອຖື ຂອງຂັ້ນຕອນຂອງການປະເມີນ ແລະ ຜົນຂອງມັນ.

3) **ຄຳຄິດເຫັນກັບຄືນຫາ 3 ແຂວງເປົ້າໝາຍຂອງ ພີແຄັບ.**

ຄຳຄິດຄຳເຫັນຕໍ່ຂອງການປະເມີນຜົນຂອງການປະເມີນ

ບັນດາຜົນຂອງການປະເມີນຜົນຂອງການປະເມີນ ໄດ້ຖືກວິເຄາະກັບ ກະຊວງແຜນການ ແລະ ການລົງທຶນ ແລະ ພະແນກແຜນການ ແລະ ການລົງທຶນແຂວງ ອຸດົມໄຊ, ບັນດາຜົນ ແລະ ປະເດັນຕ່າງໆທີ່ໄດ້ຮັບການແກ້ໄຂແມ່ນໄດ້ລາຍງານຕໍ່ ຫົວໜ້າພະແນກແຜນການ ແລະ ການລົງທຶນແຂວງ ອຸດົມໄຊ, ພະນັກງານພະແນກແຂວງ ອຸດົມໄຊ, ພະນັກງານບັນດາພະແນກການອ້ອມຂ້າງ ແລະ ທີມງານຂອງການປະເມີນຜົນຂອງການປະເມີນເອງ.

4) **ການພັດທະນາໂປຼແກມການຝຶກອົບຮົມສຳລັບປີຕໍ່ໆໄປ**

✧ **ສ້າງຕັ້ງທີມງານຂອງການຝຶກອົບຮົມ**

ໂດຍການເຫັນດີອະນຸມັດຈາກທ່ານ ວິໄຊ ຊາວັນນາ ຫົວໜ້າກົມປະເມີນຜົນ, ຜູ້ບໍລິຫານໂຄງການ ພີແຄັບ 2, ຜູ້ທີ່ມີ ລາຍຊື່ລຸ່ມນີ້ ແມ່ນທີມງານຂອງການຝຶກອົບຮົມ.

| | |
|---|---|
| ພະນັກງານກົມປະເມີນຜົນ | ທ່ານ ບັນລຸສິດ ຈິດຮູບໂລກ, ທ່ານ ພີສິດ ຊະນະສີສານ, ທ່ານ ວຽງຄຳ ລາດຊະຈັນ, ທ່ານນາງ ມາລີວັນ ພົມແສງສະຫວັນ, ທ່ານ ບົວແກ້ວ ສີພອນໄຊ |
| ພະນັກງານກົມແຜນການ | ທ່ານ ກະລຸນາ ນັນທະວົງດວງສີ |

✧ **ສຶກສາເຖິງວາລະການຝຶກອົບຮົມ ທີ່ດຳເນີນໂດຍກະຊວງແຜນການ ແລະ ການລົງທຶນ.**

ວາລະຂອງການຝຶກອົບຮົມທີ່ດຳເນີນຢ່າງເປັນເອກະລາດໂດຍກະຊວງແຜນການ ແລະ ການລົງທຶນຫຼັງຈາກສິ້ນສຸດ ພີແຄັບ ໃນເດືອນ ຕຸລາ 2007 ກໍໄດ້ສຶກສາ.

ໂຄງຮ່າງຂອງບັນດາຜົນຂອງການສຶກສາ ໄດ້ສະແດງຢູ່ລຸ່ມນີ້;

- ວາລະຂອງການຝຶກອົບຮົມຢູ່ແຂວງ ໄດ້ຖືກດຳເນີນ ຢູ່ໃນໄລຍະເວລາ ຂອງເດືອນ ທັນວາ 2007 ຫາ ເດືອນ ກຸມພາ 2008. ພະນັກງານກົມປະເມີນຜົນ ແລະ ກົມແຜນການ ກະຊວງແຜນການ ແລະ ການລົງທຶນ ໄດ້ຖືກສົ່ງລົງບັນດາແຂວງ ໃນຖານະເປັນຄູຝຶກ ແລະ ໄດ້ນຳໃຊ້ເຄື່ອງມືອຸປະກອນ ຂອງ ພີແຄັບ ທີ່ໄດ້ເຄີຍນຳໃຊ້ຢູ່ໃນລະຫວ່າງ ເດືອນ ກັນຍາ ຫາ ຕຸລາ 2007 ໃຫ້ແກ່ການຝຶກອົບຮົມ.
- ຍົກເວັ້ນແຕ່ 3 ແຂວງ ທີ່ ເປັນແຂວງເປົ້າໝາຍຂອງ ພີແຄັບ, ກະຊວງແຜນການ ແລະ ການລົງທຶນ ໄດ້ໄປທຸກໆ ແຂວງ ເພື່ອດຳເນີນການຝຶກອົບຮົມ ໂດຍໃຊ້ເວລາ 2 ຫາ 5 ວັນ ຂຶ້ນຢູ່ກັບຕາຕະລາງເວລາ. ຄ່າໃຊ້ຈ່າຍໃນການຝຶກອົບຮົມໄດ້

ມີ ການສົມທົບກັນ ລະຫວ່າງ ພະແນກແຜນການ ແລະ ການລົງທຶນ ແລະ ກະຊວງແຜນການ ແລະ ການລົງທຶນ , ເຊິ່ງສາມາດ ເປັນຕົວແບບສໍາລັບການຝຶກອົບຮົມທີ່ຍືນຍົງ.

- ສໍາລັບບັນດາກະຊວງທີ່ຢູ່ຂັ້ນສູນກາງ, ວາລະການຝຶກອົບຮົມກ່ຽວກັບການຄຸ້ມຄອງການລົງທຶນລັດ ໄດ້ຈັດຂຶ້ນໃນເດືອນທັນວາ 2007 ໂດຍການເຊີນເອົາພະນັກງານຈາກກະຊວງ ລະ 02 ທ່ານ. ຫ້ອງການ ກະຊວງແຜນການ ແລະ ການລົງທຶນໄດ້ເປັນເຈົ້າພາບຮ່ວມກັບ ກົມປະເມີນຜົນ ແລະ ສູນຝຶກອົບຮົມ, ເຊິ່ງ ກົມປະເມີນຜົນ ເປັນຜູ້ສະໜອງຄູຝຶກ ສ່ວນສູນອົບຮົມເປັນຜູ້ສະໜອງສະຖານທີ່. ວາລະຂອງການຝຶກອົບຮົມ ໄດ້ຈັດຂຶ້ນແບບເລັ່ງລັດ ພຽງແຕ່ 02 ວັນເທົ່ານັ້ນ, ດັ່ງນັ້ນ, ຈຶ່ງມີຄວາມຮຽກຮ້ອງໃຫ້ມີການຕິດຕາມຜູ້ເຂົ້າຮ່ວມການຝຶກອົບຮົມຂອງບັນດາກະຊວງຕ່າງໆ.

### ✧ ສຶກສາເຖິງຄວາມຈໍາເປັນຂອງການຝຶກອົບຮົມສໍາລັບກະຊວງແຜນການ ແລະ ການລົງທຶນ ແລະ ບັນດາແຂວງ.

ທີມງານຂອງການຝຶກອົບຮົມ ໄດ້ດໍາເນີນການສໍາຫຼວດຄວາມຈໍາເປັນຂອງການຝຶກອົບຮົມ ນໍາພະນັກງານຜູ້ທີ່ເປັນຄູຝຶກ ຢູ່ໃນກອງປະ ຊຸມວິຊາການກ່ຽວກັບການຄຸ້ມຄອງການລົງທຶນລັດ ໃນເດືອນ ກັນຍາ ຫາ ເດືອນ ຕຸລາ 2007. ນອກຈາກນັ້ນ, ການສຶກສາເຖິງຄວາມຈໍາເປັນຂອງການຝຶກອົບຮົມ ຍັງໄດ້ດໍາເນີນນໍາຜູ້ເຂົ້າຮ່ວມການຝຶກອົບຮົມ ຢູ່ແຂວງ ອຸດົມໄຊ ໂດຍການນໍາໃຊ້ ວິທີການແບບມີສ່ວນຮ່ວມ. ຫຼັງຈາກນັ້ນ, ໄດ້ແຈກຢາຍແບບສອບຖາມໃຫ້ ແກ່ຜູ້ເຂົ້າຮ່ວມທົ່ວປະເທດ. ຕໍ່ຈາກນັ້ນມາ, ຜົນໄດ້ຮັບຂອງການສຶກສາທັງໝົດໄດ້ຖືກສັງລວມເພື່ອການວິເຄາະ.

. ຜົນໄດ້ຮັບດັ່ງກ່າວ ສາມາດລາຍງານໄດ້ດັ່ງລຸ່ມນີ້;

- ຜູ້ເຂົ້າຮ່ວມຫຼາຍທ່ານ ໄດ້ສະເໜີໃຫ້ມີການຈັດການຝຶກອົບຮົມແບບເລັ່ງລັດ ກ່ຽວກັບການຂຽນບົດສະເໜີໂຄງການ ແລະ ບົດລາຍງານຄວາມຄືບໜ້າ ໂດຍນໍາໃຊ້ກໍລະນີຕົວຢ່າງທີ່ດີ. ນອກຈາກນັ້ນ ຍັງມີຂໍ້ສະເໜີໃຫ້ມີການຝຶກອົບຮົມກ່ຽວກັບວິທີການປະເມີນໂຄງການ ໂດຍແຜ່ນປະເມີນຜົນແບບກະທັດຮັດ.
- ມີການສະເໜີໃຫ້ຈັດການຝຶກອົບຮົມ ກ່ຽວກັບການນໍາໃຊ້ເຄື່ອງມືການຄຸ້ມຄອງການລົງທຶນລັດ ຂອງ ພຮແຄັບທີ່ມີເວລາເກີນກວ່າ 2 ວັນ ເຄິ່ງ.

### ✧ ການສຶກສາເຖິງຄວາມຈໍາເປັນຂອງການຝຶກອົບຮົມສໍາລັບ ບັນດາກະຊວງຂັ້ນສູນກາງ.

ທີມງານການຝຶກອົບຮົມ ໄດ້ດໍາເນີນການສໍາຫຼວດຄວາມຈໍາເປັນຂອງການຝຶກອົບຮົມ ໃນເວລາດໍາເນີນການຝຶກອົບຮົມ ກ່ຽວກັບການຄຸ້ມຄອງການລົງທຶນລັດ ໃນເດືອນ ທັນວາ 2007 ເຊິ່ງແມ່ນພະນັກງານກົມປະເມີນຜົນ ກະຊວງແຜນການ ແລະ ການລົງທຶນໄດ້ຈັດຂຶ້ນ ແລະ ເປັນຄູຝຶກ. ຜູ້ເຂົ້າຮ່ວມ ແມ່ນມາຈາກກະຊວງກະສິກໍາ ແລະ ປ່າໄມ້, ກະຊວງ ໂຍທາທິການ ແລະ ຂົນສົ່ງ, ກະຊວງສຶກສາທິການ ແລະ ກະຊວງສາທາລະນະສຸກ. ທີມງານທີ່ຮັບຜິດຊອບການຝຶກອົບຮົມໄດ້ໄປຢ້ຽມຢາມ 4 ກະຊວງ ເພື່ອສໍາພາດ ແລະ ປຶກສາຫາລືກ່ຽວກັບປະເດັນຂອງການຄຸ້ມຄອງການລົງ ທຶນລັດໃນປະຈຸບັນ ທີ່ອົງການຈັດຕັ້ງ ລັດຖະບານຂັ້ນສູນກາງປະເຊີນຢູ່.

. ຜົນຂອງການສຶກສາ ສາມາດສັງລວມດັ່ງລຸ່ມນີ້ ;

- ທັງໝົດ 4 ກະຊວງ ໄດ້ໃຫ້ຄວາມສົນໃຈກ່ຽວກັບ ບັນດາວິທີການ ແລະ ເຄື່ອງມື ສໍາລັບການຄຸ້ມຄອງໂຄງການທີ່ໃຊ້ງົບປະມານພາຍໃນ.
- ມີການເຫັນດີວ່າ ກະຊວງແຜນການ ແລະ ການລົງທຶນ ຈະຮັບເອົາການສະເໜີຂໍການຝຶກອົບຮົມຈາກແຕ່ລະກະຊວງຕາມລໍາດັບ.
- ອີງຕາມການສະເໜີຂອງກະຊວງໂຍທາທິການ ແລະ ຂົນສົ່ງ, ໄດ້ມີການຈັດການຝຶກອົບຮົມຂຶ້ນ ໃນເດືອນ ກໍລະກົດ 2008.

## ✧ ການພັດທະນາແຜນການຝຶກອົບຮົມ ຂອງສົກປີ 2008/2009

ອີງຕາມຜົນຂອງການສຶກສາເຖິງຄວາມຈໍາເປັນຂອງການຝຶກອົບຮົມ, ທີມງານການຝຶກອົບຮົມ ໄດ້ຮ່າງໜ້າວຽກ ແລະ ແຜນລວມຂອງການຝຶກອົບຮົມ, ເຊິ່ງໄດ້ວາງແຜນ ແຕ່ເດືອນ ພະຈິກ 2008ເປັນຕົ້ນໄປ. ຈຸວຽກເຊິ່ງປະກອບມີພະນັກງານຈາກກົມປະເມີນຜົນ ແລະ ກົມແຜນການ ໄດ້ຖືກສ້າງຂຶ້ນໃນເດືອນ ກໍລະກົດ 2008 ເພື່ອຈຸດປະສົງຂອງການພັດທະນາ ແລະ ຮຽບຮຽງຄືນບັນດາຄູ່ມື ແລະ ປື້ມແນະນໍາຂອງການຝຶກອົບຮົມຕ່າງໆ.

ຕໍ່ໄປນີ້ ແມ່ນຮ່າງແຜນການຝຶກອົບຮົມ ສໍາລັບພະນັກງານຂອງແຂວງ;

- ວາລະການຝຶກອົບຮົມສໍາລັບບັນດາແຂວງ ໄດ້ຖືກດໍາເນີນຈາກເດືອນ ພະຈິກ 2008 ດ້ວຍກໍານົດເວລາ 1- 2 ເດືອນ . ແຕ່ລະແຂວງ ຈະໃຊ້ເວລາ ປະມານ 01 ອາທິດ ແລະ ສໍາມະນາຈະຈັດຂຶ້ນໃນວັນສຸດທ້າຍຂອງການຝຶກອົບຮົມ.
- ທີມງານການຝຶກອົບຮົມ 4 ທີມ ປະກອບດ້ວຍພະນັກງານ 4 ຄົນຈາກກົມປະເມີນຜົນ ແລະ 2 ຄົນຈາກກົມແຜນການ ຈະໄດ້ຖືກແຕ່ງຕັ້ງຂຶ້ນ.
- ການປະເມີນ, ການຕິດຕາມກວດກາ ແລະ ການປະເມີນຜົນ ໂຄງການລົງທຶນລັດ ຈະໄດ້ຍົກຂຶ້ນໃນວາລະຂອງການຝຶກອົບຮົມ. ວາລະຂອງການຂຽນບົດສະເໜີໂຄງການ ແລະ ບົດລາຍງານຄວາມຄືບໜ້າ ຈະໄດ້ອີງໃສ່ກໍລະນີສຶກສາຕົວຈິງ.
- ອຸປະກອນການຝຶກອົບຮົມທີ່ໄດ້ພັດທະນາຂຶ້ນໃນ ພີແຄັບ ຈະໄດ້ຖືກນໍາໃຊ້, ອາດມີການປັບປຸງສ່ວນໃດໜຶ່ງຈາກທີມງານຂອງການຝຶກອົບຮົມ.

ວາລະການຝຶກອົບຮົມຄູຝຶກ ແມ່ນດໍາເນີນໂດຍພະນັກງານຝຶກອົບຮົມອະວຸໂສ ຜູ້ທີ່ມີຄວາມເຂົ້າໃຈເຖິງລະດັບ 3 ຢູ່ໃນຕົວແບບການເສີມຄວາມສາມາດຂອງ ພີແຄັບ ເປັນຜູ້ຝຶກໃຫ້ແກ່ ພະນັກງານຜູ້ທີ່ຍັງມີຄວາມເຂົ້າໃຈຢູ່ລະດັບ1 ຫຼື 2 ໃນໄລຍະ ເດືອນ ກັນຍາ ຫາ ເດືອນ ຕຸລາ 2008.

## (6) ບັນດາກິດຈະກຳສຳລັບການຄຸ້ມຄອງງົບປະມານ ແລະ ການເງິນ ຂອງການລົງທຶນລັດ [ໝາກຜົນ 2]

### (6)-1 ການຈັດສັນງົບປະມານການລົງທຶນລັດ

**1) ສຶກສາເຖິງລະບົບການຈັດສັນງົບປະມານການລົງທຶນລັດທີ່ມີຢູ່ໃນປະຈຸບັນ.**

✧ **ປະຊຸມເປີດຕົວໂດຍມີອຳນວຍການໂຄງການ ແລະ ຜູ້ບໍລິຫານໂຄງການເຂົ້າຮ່ວມ.**

ຊ່ຽວຊານດ້ານການເງິນ ແລະ ການຈັດສັນງົບປະມານ ໄດ້ແລກປ່ຽນຄຳຄິດເຫັນຕໍ່ກັບວຽກງານດັ່ງກ່າວ ແລະ ໄດ້ຢັ້ງຢືນ ສະຖານະພາບໂດຍລວມ ແລະ ບັນດາກິດຈະກຳທີ່ຈະໄດ້ດຳເນີນຢູ່ໃນລະຫວ່າງ ປີທີ 1 ແລະ ປີທີ 2 ຂອງໂຄງການ. ດຣ. ບຸນທະວີ ສີສຸພັນທອງ, ລັດຖະມົນຕີຊ່ວຍວ່າການກະຊວງແຜນການ ແລະ ການລົງທຶນ ໄດ້ໃຫ້ທິດຊີ້ນຳວ່າ ໜຶ່ງໃນບັນດາໜ້າວຽກທີ່ສຳຄັນທີ່ສຸດ ແມ່ນການສະໜອງວິທີການ ເພື່ອຮອງຮັບກັບການສະເໜີຂອງບັນດາກະຊວງ ແລະ ແຂວງ ທີ່ສະເໜີຂໍງົບເກີນຕົວເລກທີ່ສູນກາງກະກຽມໄວ້ໃຫ້. ກອງປະຊຸມສຳມະນາ ແມ່ນໄດ້ຮັບຜົນສຳເລັດ ຍ້ອນບັນດາປະເດັນ ທີ່ສຳຄັນ ໄດ້ມີການລົມ ທົບແລກ ປ່ຽນຂໍຄຳເຫັນນຳ ທັງຜູ້ອຳນວຍການໂຄງການ ແລະ ຜູ້ບໍລິຫານໂຄງການ.

✧ **ການຄັດເລືອກເອົາພະນັກງານຮ່ວມງານວຽກງານການຄຸ້ມຄອງການເງິນ ແລະ ງົບປະມານໂຄງການລົງທຶນລັດ.**

ທ່ານ ວິໄຊ ຊາວັນນາ, ຫົວໜ້າກົມປະເມີນຜົນ/ຜູ້ບໍລິຫານໂຄງການ ໄດ້ແຕ່ງຕັ້ງ ທ່ານ ວິລະພັນ ດວງທອງຄຳ ແລະ ທ່ານ ຄຳຜ່ານ ຄຳສະພົງ ມາຮ່ວມເຮັດວຽກໃນວຽກງານດັ່ງກ່າວ.

✧ **ການສຶກສາບັນດາກົດໝາຍ ແລະ ດຳລັດທີ່ກ່ຽວຂ້ອງ**

ທີມງານໄດ້ຮວບຮວມ ແລະ ສຶກສາບັນດາກົດໝາຍ ແລະ ດຳລັດທີ່ກ່ຽວຂ້ອງກັບການຈັດສັນງົບປະມານການລົງທຶນລັດ.

✧ **ການສຶກສາເຖິງຂັ້ນຕອນຂອງວຽກ ຢູ່ພາຍໃນ ກະຊວງແຜນການ ແລະ ການລົງທຶນ.**

ຜ່ານການສຳພາດກັບພະນັກງານທີ່ກ່ຽວຂ້ອງ,ທີມງານໄດ້ຢັ້ງຢືນຄືນຂັ້ນຕອນການວາງແຜນງົບປະມານການລົງທຶນລັດ ພ້ອມທັງປະເດັນທີ່ສຳຄັນ ທີ່ມີຄວາມຈຳເປັນຕ້ອງໄດ້ກ່າວເຖິງ.

ບັນດາຕົວຊີ້ບອກຕໍ່ໄປນີ້ ແມ່ນປະເດັນທີ່ສຳຄັນ.

- ຢູ່ໃນປຶ້ມແນະນຳການສ້າງແຜນງົບປະມານການລົງທຶນລັດ, ການຈັດປະເພດໂຄງການລົງທຶນລັດ ເປັນຂະແໜງການເສດຖະກິດ ແລະ ສັງຄົມ ພ້ອມກັບການກະກຽມ 6 ມາດຖານບູລະມະສິດ ແມ່ນໄດ້ລະບຸຈຳວ້. ແນວໃດກໍຕາມ, ບັນຫາຕົ້ນຕໍແມ່ນຍ້ອນບໍ່ມີເປົ້າໝາຍ ທີ່ເປັນຕົວເລກຊັດເຈນ ຫຼື ບໍ່ມີຕົວຊີ້ບອກ, ບັນດາກະຊວງ ແລະ ແຂວງ ໄດ້ສະເໜີຂໍງົບປະມານເກີນຈຳນວນງົບປະມານ ການລົງທຶນ ລັດທຸກໆປີ.
- ບູລະມະສິດ ສຳລັບໂຄງການສະເໜີໃໝ່ບໍ່ໄດ້ກ່າວເຖິງຢູ່ໃນປຶ້ມແນະນຳ.
- ໃນເມື່ອໂຄງການສະເໜີໃໝ່ຫຼາຍໂຄງການ ໄດ້ຖືກສະເໜີຂຶ້ນມາໃນທຸກໆປີ, ທັງ ກະຊວງແຜນການ ແລະ ການລົງທຶນ ແລະ ພະແນກແຜນການ ແລະ ການລົງທຶນ ຕ້ອງຮັບມືກັບບັນຫາດັ່ງກ່າວ.
- ການຍື່ນສະເໜີຂໍງົບປະມານການລົງທຶນລັດ ຈາກພະແນກແຜນການ ແລະ ການລົງທຶນ ເຖິງ ກະຊວງແຜນການ ແລະ ການລົງທຶນ ປະກົດວ່າຊ້າ. ການສະເໜີຂໍໂຄງການໃໝ່ ປະກົດວ່າເປັນໄປເອງ, ການຊັກຊ້າຂັ້ນຕອນການປະເມີນໂຄງການສະເໜີໃໝ່.
- ໂຄງການຈຳນວນໜຶ່ງທີ່ບໍ່ສອດຄ່ອງກັບປຶ້ມແນະນຳ ອາດຖືກຈັດຕັ້ງປະຕິບັດກ່ອນການໄດ້ຮັບອະນຸມັດ.
- ເຖິງແມ່ນວ່າກະຊວງແຜນການ ແລະ ການລົງທຶນ ມີອຳນາດຕັດສິນໃຈໃນການກຳນົດງົບປະມານລວມຂອງການລົງທຶນລັດ, ແຕ່ບໍ່ມີອຳນາດໃນການກຳນົດງົບປະມານສຳລັບແຕ່ລະໂຄງການ.

## ✧ ການສຶກສາເຖິງຂັ້ນຕອນຂອງວຽກຢູ່ບັນດາແຂວງ.

ທີມງານຈຳນວນໜຶ່ງ ໄດ້ເດີນທາງໄປຢ້ຽມຢາມແຂວງຄຳມ່ວນ ແລະ ໄດ້ພົບປະກັບພະນັກງານ ພະແນກແຜນການ ແລະການລົງທຶນ, ພະນັກງານພະແນກການເງິນ, ພະນັກງານພະແນກໂຍທາທິການ ແລະ ຂົນສົ່ງ, ພະນັກງານພະແນກກະສິກຳແລະປ່າໄມ້.

ທີມງານ ໄດ້ສົມທົບແລກປ່ຽນທັດສະນະຄວາມເຂົ້າໃຈກ່ຽວກັບຂັ້ນຕອນຂອງວຽກ ແລະ ຢັ້ງຢືນຄືນເຖິງປະເດັນສຳຄັນດັ່ງຕໍ່ໄປນີ້ ;

- ມີບາງກໍລະນີ ທີ່ບາງໂຄງການເລີ່ມຕົ້ນການກໍ່ສ້າງ ກ່ອນການອະນຸມັດ.
- ການປະເມີນໂຄງການສະເໜີໃຫມ່ ໂດຍພະແນກແຜນການ ແລະ ການລົງທຶນບໍ່ພຽງພໍ. ການດຳເນີນກອງປະຊຸມການປະເມີນແບບປຽບທຽບ ລະຫວ່າງໂຄງການລົງທຶນລັດ ບໍ່ໄດ້ດຳເນີນ.
- ຄວາມສາມາດຂອງພະແນກແຜນການ ແລະ
  ການລົງທຶນໃນການດຳເນີນການຕິດຕາມກວດກາຍັງມີບາງບ່ອນຕ້ອງໄດ້ປັບປຸງຕື່ມ. ຄວາມຮັບຮູ້ທີ່ໄດ້ຈາກການຝຶກອົບຮົມຈາກ ພີແຄັບ ຍັງບໍ່ທັນໄດ້ຮັບການສ້າງຕັ້ງຂຶ້ນຢ່າງເຕັມສ່ວນ.
- ມີບໍລິສັດກໍ່ສ້າງຫຼາຍບໍລິສັດ ໄດ້ຮັບຜິດຊອບຕໍ່ຄ່າໃຊ້ຈ່າຍໃນການລົງເຮັດວຽກພາກສະໜາມ, ຍ້ອນວ່າງົບປະມານລວມໃນການຄຸ້ມຄອງໂຄງການຕ່ຳ.

ໄດ້ມີການປະຊຸມໃນມື້ສຸດທ້າຍຂອງການສຶກສາ ແລະ ໄດ້ຂຽນປຶ້ມລາຍງານທີ່ປະກອບດ້ວຍເນື້ອໃນລະອຽດ (ປຶ້ມລາຍງານໄດ້ຄັດຕິດໃນເອກະສານຊ້ອນທ້າຍ).

✧ ວິເຄາະບັນດາປະເດັນຕ່າງໆ ມາດຕະການແກ້ໄຂທີ່ເປັນໄປໄດ້

ທີມງານໄດ້ວິເຄາະປະເດັນທີ່ພົບເຫັນໃນເວລາເຮັດການສຶກສາເຖິງຂັ້ນຕອນຂອງວຽກ. ບັນຫາທີ່ເປັນໃຈກາງສຳລັບການວາງແຜນງົບປະມານການລົງທຶນລັດ ແມ່ນຂາດວົງຈອນ ຂອງການວາງແຜນ-ຈັດຕັ້ງປະຕິບັດ- ກວດກາຄືນ. ມັນອາດເປັນສາເຫດໄປສູ່ຄວາມເປັນຈິງທີ່ວ່າງົບປະມານການລົງທຶນລັດ ບໍ່ໄດ້ຖືກແບ່ງປັນໄປຕາມບູລິມະສິດ ທີ່ຕິດພັນກັບການບັນລຸແຜນພັດທະນາເສດຖະກິດສັງຄົມ 5 ປີ ຄັ້ງທີ 6 ແລະ ບົດແນະນຳ ສຳລັບການວາງແຜນງົບປະມານການລົງທຶນລັດ ບໍ່ໄດ້ຮັບການປະຕິບັດຕາມຢ່າງເຂັ້ມງວດ . ຜົນຂອງການວິເຄາະ, ທີມງານໄດ້ສະຫຼຸບວ່າ ການພິຈາລະນາຄືນເນື້ອໃນຂອງບົດແນະນຳພ້ອມກັບການຝຶກອົບຮົມຢ່າງຕໍ່ເນື່ອງ. ຕາມຜົນໄດ້ຮັບຂອງການວິເຄາະ, ທີມງານໄດ້ສະຫຼຸບວ່າ ການພິຈາລະນາຄືນເນື້ອໃນຂອງບົດແນະນຳ ພ້ອມກັບການຝຶກອົບຮົມຢ່າງຕໍ່ເນື່ອງ ທີ່ດັດປັບໃສ່ການປ່ຽນແປງຂອງເຂົາເຈົ້າແມ່ນມີຄວາມສຳຄັນຫຼາຍ ເພື່ອຫຼຸດພົ້ນອອກຈາກປະເດັນທີ່ເກີດມີຢູ່ໃນປະຈຸບັນ.

(6)-2 ການຄຸ້ມຄອງການເງິນ ແລະ ການເບີກຈ່າຍງົບປະມານການລົງທຶນລັດ

1) **ການສຶກສາເຖິງການຄຸ້ມຄອງການເງິນ ແລະ ການເບີກຈ່າຍງົບປະມານໂຄງການການລົງທຶນລັດ.**

✧ **ສຳມະນາເປີດຕົວໂຄງການ ໂດຍມີ ຜູ້ອຳນວຍການໂຄງການ ແລະ ຜູ້ບໍລິຫານໂຄງການເຂົ້າຮ່ວມນຳ.**

✧ **ການຄັດເລືອກພະນັກງານຮ່ວມງານສຳລັບການຄຸ້ມຄອງການເງິນ ແລະ ງົບປະມານການລົງທຶນລັດ.**

✧ **ສຶກສາເຖິງບັນດາກົດໝາຍ ແລະ ດຳລັດທີ່ກ່ຽວຂ້ອງ**

ໄດ້ເຮັດບັນດາກິດຈະກຳອັນດຽວກັນກັບ (6)-1 ທີ່ກ່າວຢູ່ຂ້າງເທິງ.

✧ **ສຶກສາເຖິງຂັ້ນຕອນວຽກຢູ່ ກະຊວງແຜນການ ແລະ ການລົງທຶນ**

ຢູ່ໃນວາລະການສຳພາດພະນັກງານທີ່ກ່ຽວຂ້ອງ, ທີມງານໄດ້ພະຍາຍາມເຂົ້າໃຈເຖິງການມີສ່ວນກ່ຽວຂ້ອງຂອງ ກະຊວງແຜນການ ແລະ ການລົງທຶນ ຕໍ່ວຽກງານການເບີກຈ່າຍງົບປະມານການລົງທຶນລັດຢູ່ແຂວງ. ເຖິງແມ່ນວ່າ ກົມແຜນການ ມີຄວາມຮັບຜິດຊອບ ໃນການຄຸ້ມຄອງການເບີກຈ່າຍງົບປະມານການລົງທຶນລັດໂດຍລວມ, ການຄຸ້ມຄອງຕົວຈິງ ຍັງແມ່ນດຳເນີນ ໂດຍພະແນກແຜນການ ແລະ ການລົງທຶນ. ກະຊວງແຜນການ ແລະ ການລົງທຶນສັງລວມຕົວເລກທີ່ທາງພະແນກແຜນການ ແລະ ການລົງທຶນລາຍງານໃຫ້ເພື່ອເຮັດລາຍງານປະຈຳໄຕມາດ.

## ✧ ສຶກສາເຖິງຂັ້ນຕອນຂອງວຽກຢູ່ບັນດາແຂວງ

ທີມງານຈຳນວນໜຶ່ງ ໄດ້ເດີນທາງໄປຢ້ຽມຢາມນະຄອນຫຼວງວຽງຈັນ, ຄຳມ່ວນ, ບໍລິຄຳໄຊ ແລະ ແຂວງວຽງຈັນ ແລະ ໄດ້ພົບປະກັບ ພະແນກແຜນການ ແລະ ການລົງທຶນ, ພະແນກການເງິນ, ພະແນກໂຍທາທິການ ແລະ ຂົນສົ່ງ, ພະແນກກະສິກຳ ແລະ ປ່າໄມ້. ທີມງານໄດ້ແລກປ່ຽນທັດສະນະກ່ຽວກັບຂັ້ນຕອນຂອງວຽກ ແລະ ຢັ້ງຢືນຄືນກ່ຽວກັບປະເດັນທີ່ສຳຄັນຕໍ່ໄປນີ້ ;

- ເຖິງແມ່ນວ່າ ມີ 3 ຂັ້ນຕອນຕາຍຕົວທີ່ກຳນົດໄວ້ ໃນການປະມູນ, ສັນຍາໂດຍກົງ, ການສົມທຽບລາຄາ ແລະ ການແຂ່ງຂັນຂອງຜູ້ປະມູນ, ຢູ່ໃນຄວາມເປັນຈິງແລ້ວ, ການເຊັນສັນຍາໂດຍກົງ ແມ່ນ ຖືກນຳໃຊ້ກັບໂຄງການລົງທຶນລັດສ່ວນໃຫຍ່. ສະນັ້ນ, ຈຶ່ງມີຫຼາຍກໍລະ ນີ ທີ່ມີລາຄາຂອງສັນຍາ ສູງກວ່າງົບປະມານ.
- ໃນເມື່ອ ຂໍ້ມູນຄວາມຄືບໜ້າຂອງການກໍ່ສ້າງໂຄງການ ແລະ ຕາຕະລາງການຊຳລະບໍ່ໄດ້ມີການປຶກສາຫາລືກັນຢູ່ບັນດາພະແນກການຂອງແຂວງ , ຈຶ່ງມີຫຼາຍກໍລະນີ ທີ່ການສະໜອງທຶນມີການແກ່ຍາວ.
- ງົບປະມານ, ການຈັດຕັ້ງປະຕິບັດ ແລະ ການເບີກຈ່າຍ ບໍ່ສອດຄ່ອງກັນ. ການຊຳລະໃຫ້ແກ່ຜູ້ຮັບໝົາກໍ່ສ້າງ ສ່ວນຫຼາຍແມ່ນຂຶ້ນຢູ່ກັບເງື່ອນໄຂຂອງຄັງເງິນໃນເວລານັ້ນ, ສະນັ້ນ, ບາງການຊຳລະຈຶ່ງແກ່ຍາວ. ບາງການຊຳລະຈຶ່ງໄດ້ອີງໃສ່ງົບປະມານຂອງ ປີຕໍ່ໄປ.
- ດຸນຂອງຄັງເງິນ ຂອງພະແນກການເງິນ ຂຶ້ນຢູ່ກັບຈຳນວນ ແລະ ກອບເວລາ ຂອງລາຍຮັບ, ເຊິ່ງສ່ວນໃຫຍ່ແມ່ນປະກອບດ້ວຍການເກັບອາກອນ. ສະນັ້ນ, ການຊຳລະທີ່ຂຶ້ນກັບດຸນຂອງຄັງເງິນ ຈຶ່ງບໍ່ໄດ້ຮັບການປະຕິບັດທັນທີໃນເວລາສຳເລັດການກໍ່ສ້າງ.
- ໃນກໍລະນີທີ່ມູນຄ່າໂຄງການ ເກີນແຜນເບື້ອງຕົ້ນ, ມູນຄ່າທີ່ເກີນ ຍົກໄປຊຳລະໃນປີຕໍ່ໄປ ລະບຸວ່າເປັນໂຄງການສືບຕໍ່. ສະນັ້ນ, ຈຶ່ງອາດໃຊ້ເວລາຫຼາຍປີໃນການຊຳລະຄືນ.
- ໃນເມື່ອ ການອະນຸມັດມູນຄ່າເກີນມີຄວາມງ່າຍດາຍຈາກລັດຖະບານ, ຜູ້ຮັບເໝົາກໍ່ສ້າງ ຈຶ່ງບໍ່ພະຍາຍາມສຳເລັດໂຄງການຕາມງົບປະມານທີ່ວາງແຜນໄວ້. ໂດຍຫຼັກຖານແລ້ວ, ມີຫຼາຍໂຄງການທີ່ໃຊ້ງົບເກີນ, ເປັນສາເຫດທີ່ເຮັດໃຫ້ມີການຈ່າຍເກີນງົບປະມານການລົງທຶນລັດປະຈຳປີ.
- ຜູ້ຮັບເໝົາກໍ່ສ້າງ ໄດ້ຮັບຄຳສັ່ງໃຫ້ສຳເລັດໂຄງການຢູ່ພາຍໃນ 2-3 ປີງົບປະມານ, ເຖິງວ່າງົບປະມານທີ່ໄດ້ຮັບການຈັດສັນສຳລັບໂຄງການບໍ່ໄດ້ເຕັມຕາມຈຳນວນ. ສິ່ງດັ່ງກ່າວນີ້ ຍັງເປັນຜົນຕໍ່ການຊຳລະໄລຍະຍາວ. ສຳລັບໂຄງການລົງທຶນລັດທີ່ ມີການກໍ່ສ້າງແກ່ຍາວໄປຫຼາຍປີ, ຈາກປີທີ 2 ໄປ ແມ່ນຖືກພິຈາລະນາເປັນໂຄງການສືບຕໍ່ ເຖິງວ່າໂຄງການໄດ້ຖືກກໍ່ສ້າງສຳເລັດແລ້ວກໍຕາມ. ມີຂໍ້ສົມມຸດຖານວ່າ ມີຫຼາຍໂຄງການໃນປະເພດທີ່ກຳລັງສືບຕໍ່, ແຕ່ ຕົວຈິງແລ້ວ ສາມາດພິຈາລະນາເປັນ ໜີ້ສິນ.
- ອາດມີບາງໂຄງການໄດ້ຮັບການຈັດຕັ້ງປະຕິບັດກ່ອນການອະນຸມັດ ແລະ ບໍ່ໄດ້ຮັບການຈັດສັນງົບປະມານ, ອັນນີ້ຍັງເປັນສາເຫດທີ່ພາໃຫ້ໜີ້ສິນເພີ່ມຂຶ້ນ.
- ການແກ່ຍາວການຊຳລະຢູ່ໃນຫຼາຍໂຄງການ ເປັນເຫດໃຫ້ເກີດຄວາມຫຍຸ້ງຍາກສຳລັບເຈົ້າຂອງໂຄງການ ໃນການແຈ້ງການໄປຫາຜູ້ຮັບເໝົາ. ຜົນຕາມມາ ຄື ຄຸນນະພາບຂອງການກໍ່ສ້າງກໍຈະຫຼຸດລົງ.

## ✧ ວິເຄາະປະເດັນ ແລະ ມາດຕະການແກ້ໄຂທີ່ເປັນໄປໄດ້

ທີມງານໄດ້ວິເຄາະບັນດາປະເດັນທີ່ຊອກເຫັນໃນເວລາ ສຶກສາເຖິງຂັ້ນຕອນຂອງວຽກ. ບັນຫາຫຼັກໆ ຂອງການຄຸ້ມຄອງການເງິນ ແລະ ການເບີກຈ່າຍງົບປະມານການລົງທຶນລັດ ແມ່ນ "ງົບປະມານການລົງທຶນລັດບໍ່ໄດ້ຮັບການເບີກຈ່າຍຕາມແຜນທີ່ວາງໄວ້ " ແລະ "  ບໍ່ໄດ້ເຮັດການຕິດຕາມກວດກາການເງິນ ".

ຕໍ່ໄປນີ້ ແມ່ນມາດຕະການແກ້ໄຂ ທີ່ສາມາດພິຈາລະນາຕໍ່;

- ລະບົບການຕິດຕາມກວດກາການເບີກຈ່າຍງົບປະມານໂຄງການລົງທຶນລັດ ທີ່ປັບປຸງແລ້ວຕ້ອງໄດ້ຮັບການແນະນຳ ເພື່ອການລົດຜ່ອນຈຳນວນໂຄງການທີ່ມີມູນຄ່າເກີນແຜນເບື້ອງຕົ້ນ ແລະ ປ້ອງກັນການເກີດມີໂຄງການສືບຕໍ່ໜີ້ສິນ.
- ຄວາມສາມາດຂອງການຄຸ້ມຄອງການເບີກຈ່າຍງົບປະມານການລົງທຶນລັດ ຈຳເປັນຕ້ອງໄດ້ເສີມສ້າງໃຫ້ມີຄວາມເຂັ້ມແຂງກວ່າເກົ່າ ໂດຍຜ່ານການຝຶກອົບຮົມ.
- ການແຈ້ງການ ໂດຍເອກະສານທາງການ ເພື່ອເພີ່ມທະວີການຄຸ້ມຄອງການເບີກຈ່າຍງົບປະມານການລົງທຶນລັດໃຫ້ເຂັ້ມແຂງ ແລະ ບໍ່ສະໜັບສະໜູນໃຫ້ມີໂຄງການໜີ້ທີ່ເກີດຂື້ນໃໝ່ ( ລວມທັງໂຄງການທີ່ບໍ່ນອນໃນແຜນ, ໂຄງການສືບຕໍ່ເປັນໜີ້ ).

## (7) ບັນດາກິດຈະກຳທີ່ສະໜັບສະໜູນທາງດ້ານການໃຫ້ຄຳປຶກສາຕໍ່ກົດໝາຍການຄຸ້ມຄອງການລົງທຶນລັດ[ໝາກຜົນ 3].

### 1) ທົບທວນຄືນກອບນິຕິກຳທີ່ມີຢູ່ ແລະ ໃຫ້ຄຳແນະນຳຕໍ່ຮ່າງກົດໝາຍ.

ຊ່ຽວຊານທີ່ຮັບຜິດຊອບການໃຫ້ຄຳຄິດເຫັນຕໍ່ກົດໝາຍການລົງທຶນລັດ ທົບທວນຄືນກອບນິຕິກຳທີ່ມີຢູ່ສຳລັບການຄຸ້ມຄອງການລົງທຶນລັດ ໂດຍໄດ້ເອົາໃຈໃສ່ ດຳລັດ ນາຍົກລັດຖະມົນຕີ ສະບັບເລກທີ 58 ( ພິມໃນເດືອນ ມິຖຸນາ 2002) ແລະ ຂໍ້ກຳນົດ ເລກທີ 918 ເຊິ່ງເປັນບົດແນະນຳໃນການຈັດຕັ້ງປະຕິບັດດຳລັດ 58. ຊ່ຽວຊານ ຍັງໄດ້ເກັບກຳບັນດາດຳລັດ, ຂໍ້ກຳນົດ ແລະ ບັນດາຂໍ້ກຳນົດກ່ຽວກັບພາລະບົດບາດໜ້າທີ່ ຂອງ ບັນດາອົງການຈັດຕັ້ງທີ່ ກ່ຽວຂ້ອງກັບການຄຸ້ມຄອງການລົງທຶນລັດ ເຊັ່ນ : ກະຊວງແຜນການ ແລະ ການລົງທຶນ, ພະແນກແຜນການ ແລະ ການລົງທຶນ ແລະ ບັນດາພະແນກການຕ່າງໆຂອງກະຊວງຢູ່ຂັ້ນແຂວງ. ຊ່ຽວຊານຍັງໄດ້ສຶກສາຄວາມຄືບໜ້າຂອງການຮັບຮອງກົດໝາຍການລົງທຶນຢູ່ປະເທດຫວຽດນາມ.

ຮ່າງກົດໝາຍການລົງທຶນລັດ ໄດ້ຖືກເຮັດສຳເລັດໂດຍທີມງານພັດທະນາກົດໝາຍຂອງກະຊວງແຜນການ ແລະ ການລົງທຶນ. ຊ່ຽວຊານ ຈະວິເຄາະຮ່າງກົດໝາຍດັ່ງກ່າວ ແລະ ຈະໃຫ້ຄຳເຫັນ ແລະ ຈະວິເຄາະຜົນໄດ້ຮັບຂອງ ກອງປະຊຸມແລກປ່ຽນຄຳຄິດເຫັນ ທີ່ໄດ້ຈັດຂື້ນ ຢູ່ພາຍໃນທີມງານ ກະຊວງແຜນການ ແລະ ການລົງທຶນ ແລະ ອົງການອື່ນໆ.

### 2) ການຝຶກອົບຮົມຢູ່ປະເທດທີ ສາມ ທີ່ ສສ ຫວຽດນາມ

ການຝຶກອົບຮົມຢູ່ປະເທດທີ ສາມ ໄດ້ມີຂື້ນຢູ່ ນະຄອນຫຼວງຮ່າໂນຍ, ສສ ຫວຽດນາມ ເພື່ອເຂົ້າໃຈເຖິງສະພາບການການຄຸ້ມຄອງການລົງທຶນລັດ ຂອງເຂົາເຈົ້າ ພ້ອມກັບກອບນິຕິກຳຕ່າງໆ. ສຳມະນາກອນ ໄດ້ຢ້ຽມ

ຍາມກະຊວງແຜນການ ແລະ ການລົງທຶນຂອງຫວຽດນາມ ແລະ ອົງການອື່ນໆທີ່ກ່ຽວຂ້ອງ ໃນລະຫວ່າງວັນທີ 17 ຫາ 23 ສິງຫາ 2008. ເນື້ອໃນຂອງການຝຶກອົບຮົມ ແລະ ຜົນໄດ້ຮັບຈາກການຝຶກອົບຮົມ ແລະ ບົດຮຽນທີ່ຖອດຖອນໄດ້ ໄດ້ລະບຸຢູ່ໃນບົດລາຍງານທີ່ຄັດຕິດມາພ້ອມນີ້.

(8) ບັນດາກິດຈະກຳ ສຳລັບການປັບປຸງບັນດາວິທີການໃນການຄຸ້ມຄອງການລົງທຶນລັດດ[ໝາກຜົນ 4]..

### (8)-1 ການຄຸ້ມຄອງທຶນສົມທົບກັບໂຄງການ ODA

#### 1) ສຶກສາເຖິງສະພາບການການຄຸ້ມຄອງໂຄງການ ODA ໃນປະຈຸບັນ.

#### ✧ ຕິດຕໍ່ພົວພັນ ກັບ ອົງການຈັດຕັ້ງທີ່ກ່ຽວຂ້ອງ

ຊ່ຽວຊານທີ່ຮັບຜິດຊອບສຳລັບການຄຸ້ມຄອງໂຄງການODA ໄດ້ອະທິບາຍເຖິງບັນດາໜ້າວຽກຕໍ່ກົມຮ່ວມມືສາກົນ. ຊ່ຽວຊານໄດ້ເນັ້ນໃສ່ຈຸດທີ່ ຈຸດປະສົງຂອງ ພີແຄັບ 2 ທີ່ວ່າ ຈະສະໜອງການສະໜັບສະໜູນທາງດ້ານວິຊາການເພື່ອເຮັດໃຫ້ການຄຸ້ມຄອງການລົງທຶນລັດມີປະສິດທິພາບ, ແຕ່ຍັງເຄົາລົບນັບຖືລະບົບ ທີ່ເປັນຢູ່ໃນປະຈຸ ບັນ ແລະ ບໍ່ໄດ້ຕັ້ງໃຈທີ່ປັບປຸງໂຄງສ້າງຂອງຂັ້ນຕອນວຽກທັງໝົດ ເຊິ່ງອາດເປັນສາເຫດ ທີ່ພາໃຫ້ເກີດຄວາມບໍ່ ເຂົ້າໃຈ. ຜົນຂອງການປຶກສາຫາລື ໄດ້ມີການເຫັນດີ *ກ.* ການຮ່ວມມືການເຮັດວຽກ ລະຫວ່າງກົມຮ່ວມມືສາກົນ ແລະ ພີແຄັບ 2 ແມ່ນຍັງສາມາດຄາດຫວັງໄດ້, *ຂ.* ພະນັກງານຮ່ວມເຮັດວຽກ ຈະໄດ້ຮັບການແຕ່ງຕັ້ງຈາກກົມ ຮ່ວມມືສາກົນ ແລະ *ຄ.* ຈະໄດ້ຮັບການແລກປ່ຽນຂໍ້ມູນກ່ຽວກັບການຄຸ້ມ ຄອງ ODA.

#### ✧ ການສຶກສາເບື້ອງຕົ້ນ.

ຊ່ຽວຊານທີ່ຮັບຜິດຊອບກ່ຽວກັບ ການຄຸ້ມຄອງໂຄງການ ODA ໄດ້ເລີ່ມຕົ້ນເຮັດການສຶກສາເບື້ອງຕົ້ນກ່ຽວກັບຂັ້ນຕອນຂອງວຽກ ຂອງທຶນສົມທົບກັບໂຄງການ ODA . ການສຶກສາຈະສືບຕໍ່ ຢູ່ໃນປີທີ 2 ຂອງໂຄງການ ກັບທີ່ປຶກ ສາພາຍໃນ ແລະ ຫົວໜ້າທີມທີ່ປຶກສາຈະຮັບຜິດຊອບໃນການຕິດຕາມ. ບັນດາສິ່ງໄດ້ພົບເຫັນ ຈະໄດ້ສົມທົບກັບ ກະຊວງແຜນການ ແລະ ການລົງທຶນ ແລະ ຈະສືບຕໍ່ດ້ວຍວິທີການທີ່ເປັນທາງການ.

### (8)-2 ການຄຸ້ມຄອງການລົງທຶນລັດ ຢູ່ຂັ້ນເມືອງ.

#### 1) ສຶກສາເຖິງວຽກ ແລະ ລະດັບຄວາມສາມາດ ຂອງຫ້ອງການແຜນການ ແລະ ສະຖິຕິ.

ຊ່ຽວຊານທີ່ຮັບຜິດຊອບ ກ່ຽວກັບການຄຸ້ມຄອງການລົງທຶນລັດ ຢູ່ຂັ້ນເມືອງ ໄດ້ເກັບກຳເອົາ ບັນດາຂໍ້ກຳນົດ ແລະ ກົດລະບຽບກ່ຽວກັບໜ້າທີ່ ແລະ ຄວາມຮັບຜິດຊອບ ຂອງພະນັກງານຫ້ອງການແຜນການ ແລະ ສະຖິ

ຕິເມືອງ, ພ້ອມກັບຂໍ້ມູນກ່ຽວກັບລະດັບຄວາມສາມາດຢູ່ໃນບາງເມືອງ. ອີງໃສ່ ຂໍ້ມູນດັ່ງກ່າວນີ້, ຊ່ຽວຊານ ຈະສືບຕໍ່ສຶກສາ ຂັ້ນຕອນການຄຸ້ມຄອງການລົງທຶນລັດ ທີ່ສາມາດເຮັດໄດ້ ທີ່ຂັ້ນເມືອງ ສາມາດນຳໃຊ້ຕໍ່ໄດ້.

**(8)-3 ການຄຸ້ມຄອງແຜນງານ**

**1) ການທົບທວນຄືນແຜນປະຕິບັດງານ**

✧ **ການສຶກສາເບື້ອງຕົ້ນ**

ຊ່ຽວຊານທີ່ຮັບຜິດຊອບ ສຳລັບການຄຸ້ມຄອງແຜນງານໄດ້ເລີ່ມເຮັດການສຶກສາເບື້ອງຕົ້ນ ກ່ຽວກັບການພົວພັນ ລະຫວ່າງ ແຜນພັດທະນາເສດຖະກິດສັງຄົມ 5 ປີ ຄັ້ງທີ 6, ມະຕິ 8 ຂອງສູນກາງພັກ ກ່ຽວກັບແຜນປະຕິບັດງານ 2006-2010 ແລະ ການລົງທຶນລັດ. ການສຶກສາ ຈະສືບຕໍ່ຢູ່ໃນປີ ທີ 2 ຂອງໂຄງການ ກັບທີ່ປຶກສາພາຍໃນ ແລະ ຫົວໜ້າທີມທີ່ປຶກສາຈະເປັນຜູ້ຕິດຕາມ. ບັນດາສິ່ງໄດ້ພົບເຫັນ ຈະໄດ້ສົມທົບກັບກະຊວງແຜນການ ແລະ ການລົງທຶນ ແລະ ຈະສືບຕໍ່ດ້ວຍວິທີການທີ່ເປັນທາງການ.

**2) ການກະກຽມສຳລັບການຮ່າງແຜນງານທົດລອງ**

✧ **ການພິຈາລະນາເບື້ອງຕົ້ນກ່ຽວກັບການຄັດເລືອກຂະແໜງການຕົວແບບ.**

ຊ່ຽວຊານທີ່ຮັບຜິດຊອບກ່ຽວກັບການຄຸ້ມຄອງແຜນງານ ໄດ້ມີການປຶກສາຫາລືເບື້ອງຕົ້ນກັບທ່ານ ອຸ່ນເຮືອນ ຈິດຕະພົງສ໌, ຮອງຫົວໜ້າກົມແຜນການ ເພື່ອກຳນົດຂະແໜງການ ທີ່ຄາດວ່າຈະສາມາດເປັນຂະແໜງການທົດສອບຂອງການຄຸ້ມຄອງແຜນງານ. ກະຊວງທີ່ຄາດວ່າຈະເປັນ ມີ :*ກ*. ກະຊວງກະສິກຳ ແລະ ປ່າໄມ້ ເຊິ່ງມີການພົວ ພັນທີ່ດີກັບ ພີແຄັບ ໃນໄລຍະທຳອິດ ແລະ *ຂ*. ກະຊວງສຶກສາ ເຊິ່ງໄດ້ຮັບງົບປະມານການລົງທຶນລັດຫຼາຍທີ່ສຸດ. ຊ່ຽວຊານໄດ້ເຫັນດີຕາມການແນະນຳຂອງທ່ານ ອຸ່ນເຮືອນ ແລະ ແນະນຳວ່າ ກະຊວງທີ່ມີຊ່ຽວຊານຍີ່ປຸ່ນປະຈຳຢູ່ແລ້ວ ກໍຄວນຈະໄດ້ຮັບການພິຈາລະນາເຊັ່ນກັນ.

ໃນເວລາທີ່ເຮັດການສຶກສາເຖິງຄວາມຈຳເປັນຂອງການຝຶກອົບຮົມ ຢູ່ໃນເດືອນ ກໍລະກົດ 2008, 4 ກະຊວງ ເຊິ່ງລວມ ມີ : ກະຊວງກະສິກຳ ແລະ ປ່າໄມ້, ກະຊວງໂຍທາທິການ ແລະ ຂົນສົ່ງ, ກະຊວງສຶກສາທິການ ແລະ ກະຊວງສາທາລະນະສຸກ ໄດ້ສະແດງໃຫ້ເຫັນເຖິງຄວາມສຳຄັນຂອງການແນະນຳວິທີການການຄຸ້ມຄອງການລົງທຶນລັດ. ນອກຈາກນັ້ນແລ້ວ, ມັນຍັງໄດ້ລະບຸຢູ່ໃນແຜນປະຕິບັດການ ທີ່ ພີແຄັບ 2 ຈະສະໜອງການ ສະໜັບສະໜູນການຄຸ້ມຄອງການລົງທຶນລັດ ຢູ່ໃນ ຂະໜງສຶກສາ. ເມື່ອພິຈາລະນາເບິ່ງຄວາມເປັນມານີ້ ແລ້ວ, ທັງ 4 ກະຊວງການດັ່ງກ່າວນີ້ ສາມາດໄດ້ຮັບການພິ ຈາລະນາໃຫ້ເປັນຂະແໜງການທົດສອບແລ້ວ.

### (9) ອື່ນໆ

1) ຄວາມເປັນໄປໄດ້ກ່ຽວກັບການຮ່ວມມືກັບບັນດາໂຄງການຂອງຜູ້ໃຫ້ທຶນອື່ນໆ

✧ **ບັນດາໂຄງການຂອງຜູ້ໃຫ້ທຶນອື່ນໆ ທີ່ຂຶ້ນກັບກົມແຜນການ ກະຊວງແຜນການ ແລະ ການລົງທຶນ.**

ຫົວໜ້າທີມທີ່ປຶກສາໄດ້ ປຶກສາຫາລືກັບບັນດາທີ່ປຶກສາຈາກ ໂຄງການຜູ້ໃຫ້ທຶນອື່ນໆ 2 ໂຄງການ ທີ່ຢູ່ໃນຄວາມຮັບຜິດຊອບຂອງ ທ່ານນາງ ພອນວັນ ອຸທະວົງ, ຮອງຫົວໜ້າກົມແຜນການ ເພື່ອຊອກຫາຄວາມເປັນໄປໄດ້ໃນການປະສານສົມທົບກັບ ພີແຄັບ 2 . ທ່ານນາງ ພອນວັນ ອຸທະວົງ ມີຄວາມຕັ້ງໃຈທີ່ຈະໃຫ້ມີການພົວພັນຢ່າງໃກ້ ສິດ ລະຫວ່າງ ພີແຄັບ 2 ກັບ ອີກ 2 ໂຄງການ ຂອງຜູ້ໃຫ້ທຶນອື່ນໆ; *ກ.* ໂຄງການເສີມສ້າງຄວາມສາມາດທາງ ດ້ານການຄຸ້ມຄອງການເງິນທີ່ສະໜັບສະໜູນໂດຍທະນາຄານໂລກ ແລະ *ຂ.* ໂຄງການສະໜັບສະໜູນ ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດສັງຄົມ ສະໜັບສະໜູນໂດຍອົງການສະຫະປະຊາ ຊາດ ເພື່ອການພັດທະ ນາ (UNDP). ແນວໃດກໍຕາມ, ໃນເມື່ອໂຄງການດັ່ງກ່າວໄດ້ມີເວລາໃນການໃຫ້ ຄຳປຶກ ສາສັ້ນພຽງແຕ່ 2 ເດືອນ, ສະພາບປະຈຸບັນ ຂອງ 2 ໂຄງການດັ່ງກ່າວນັ້ນ ອາດບໍ່ໄດ້ຮັບການວິເຄາະຢ່າງເຕັມສ່ວນ.

✧ **ໂຄງການຂອງຜູ້ໃຫ້ທຶນອື່ນໆ ຢູ່ກົມຮ່ວມມືສາກົນ ກະຊວງແຜນການ ແລະ ການລົງທຶນ**

ຊ່ຽວຊານທີ່ຮັບຜິດຊອບການຄຸ້ມຄອງໂຄງການ ODA ໄດ້ຢ້ຽມຢາມ ພະແນກປະຕິບັດປະສິດທິຜົນຂອງການຊ່ວຍເຫຼືອ ກົມຮ່ວມມືສາກົນ ທີ່ຮັບຜິດຊອບໂຄງການເສີມສ້າງຄວາມອາດສາມາດໃນການຄຸ້ມຄອງໂຄງການ ແລະ ປັບປຸງການຄຸ້ມຄອງການເງິນ ( Standard Operating Procedures Project -SOP) ສະໜັບສະໜູນໂດຍ ທະນາຄານໂລກ ແລະ ໄດ້ແລກປ່ຽນຂໍ້ມູນນຳກັນຂັ້ນພື້ນຖານ. ໂຄງການ SOP ມີຈຸດປະສົງ ຊ່ວຍໃຫ້ຂັ້ນຕອນການເງິນ ເປັນມາດຕະຖານ ຜ່ານບັນດາຄູ່ມື ແລະ ການຝຶກອົບຮົມທີ່ພັດທະນາຂຶ້ນໂດຍເຂົາເຈົ້າເອງ. ໝາກຜົນທີ່ຄາດໄວ້ ແມ່ນ *ກ.* ຄູ່ມືກ່ຽວກັບການຄຸ້ມຄອງໂຄງການ, *ຂ.* ຄູ່ມືການຄຸ້ມຄອງການເງິນ ແລະ *ຄ.* ການຝຶກອົບຮົມ ໂດຍອີງໃສ່ຄູ່ມືທັງສອງດັ່ງກ່າວ.

## 1.3 ໂຄງຮ່າງ ແລະ ເຫດຜົນຂອງການປ່ຽນແປງຢູ່ໃນບັນດາກິດຈະກຳສົມທຽບໃສ່ແຜນເບື້ອງຕົ້ນ

ຢູ່ໃນແຜນເບື້ອງຕົ້ນ, ໄດ້ມີການວາງແຜນໄວ້ທີ່ຈະດຳເນີນຢູ່ 3 ແຂວງເປົ້າໝາຍ ( ຄຳມ່ວນ, ສາລະວັນ ແລະ ອຸດົມໄຊ ). ແນວໃດກໍຕາມ, ທີມງານໄດ້ປ່ຽນແປງບໍ່ເດີນທາງໄປແຂວງ ສາລະວັນ ພາຍໃນປີນີ້. ແຕ່ໄດ້ເດີນທາງໄປແຂວງ ຄຳມ່ວນ, ບໍລິຄຳໄຊ, ວຽງຈັນ, ເພື່ອສຶກສາເຖິງປະເດັນກ່ຽວກັບການຄຸ້ມຄອງການເງິນຂອງການລົງທຶນລັດ.ເຊິ່ງບໍ່ໄດ້ວາງແຜນໄວ້ໃນເບື້ອງຕົ້ນ.

ອັນນີ້ແມ່ນຍ້ອນວ່າ ທີມງານໄດ້ຊອກເຫັນຄວາມເປັນຈິງວ່າ ການຄຸ້ມຄອງການເງິນຂອງການລົງທຶນລັດ ທີ່ພົວພັນເຖິງ " ໝາກຜົນ 2-2 - ການຄຸ້ມຄອງການເງິນ ແລະ ການເບີກຈ່າຍງົບປະມານການລົງທຶນລັດ " ແມ່ນຈັດຕັ້ງປະຕິບັດຢູ່ຂັ້ນແຂວງ ແຕ່ບໍ່ແມ່ນຢູ່ກະຊວງແຜນການ ແລະ ການລົງທຶນ. ອຳນາດການປົກຄອງ ແຂວງ , ເຊິ່ງລວມມີທັງພະແນກແຜນການ ແລະການລົງທຶນ, ພະແນກການເງິນ ແລະ ບັນດາເຈົ້າຂອງໂຄງການ ເປັນຜູ້ຮັບຜິດຊອບໃນການຈັດຕັ້ງປະຕິບັດການເບີກຈ່າຍງົບປະມານການລົງທຶນລັດ, ສ່ວນກະຊວງແຜນການ ແລະ ການລົງທຶນເປັນຜູ້ຕິດຕາມກວດກາການບໍລິຫານງົບປະມານ. ດັ່ງນັ້ນ, ການເດີນທາງໄປແຂວງຈຶ່ງສາມາດຄົ້ນພົບບັນຫາດັ່ງກ່າວໄດ້.

## 1.4 ບັນດາປະເດັນທີ່ຈະຕ້ອງໄດ້ຮັບການພິຈາລະນາ

### (1) ອົງການຈັດຕັ້ງຂອງໂຄງການ

ຍັງມີຊ່ອງຫວ່າງສຳລັບການປັບປຸງ ຢູ່ໃນການສ້າງຕັ້ງໂຄງຮ່າງການຈັດຕັ້ງປະຕິບັດໂຄງການທີ່ແນ່ນອນລະຫວ່າງ 3 ກົມທີ່ພົວພັນກັບໂຄງການ ເຊັ່ນ : ກົມປະເມີນຜົນ, ກົມແຜນການ ແລະ ກົມຮ່ວມມືສາກົນ. ກົມຮ່ວມມືສາກົນ, ເມື່ອລົມທຽບໃສ່ກົມປະເມີນຜົນ ແລະ ກົມແຜນການ ທີ່ເປັນກົມຮ່ວມງານຂອງ ພີແຄັບໃນໄລຍະຜ່ານມາແລ້ວ, ຍັງມີຄວາມຈຳເປັນຕ້ອງໄດ້ຮັບຄວາມເອົາໃຈໃສ່ຕື່ມຈາກໂຄງ ການ. ໂຄງການມີຄວາມຕັ້ງໃຈ ທີ່ຈະມີການຕິດຕໍ່ພົວພັນກັບທັງ 3 ກົມຢ່າງໃກ້ສິດ ໃຕ້ການນຳພາຂອງ ອຳນວຍການໂຄງການ ທ່ານ ດຣ. ບຸນທະວີ ສີສຸພັນທອງ, ລັດຖະມົນຕີຊ່ວຍວ່າການກະ ຊວງແຜນການ ແລະ ການລົງທຶນ.

### (2) ວາລະການຝຶກອົບຮົມໃຫ້ແກ່ບັນດາອົງການຈັດຕັ້ງຂອງລັດຖະບານຂັ້ນສູນກາງ

ວາລະການຝຶກອົບຮົມການຄຸ້ມຄອງການລົງທຶນລັດ ສຳລັບພະນັກງານຂອງແຂວງ ໄດ້ຮັບການພັດທະນາຂື້ນໃນໄລຍະຜ່ານມາຂອງ ພີແຄັບ ແລະ ຢູ່ໃນໄລຍະຂອງການສືບຕໍ່ທີ່ແນ່ນອນແລ້ວ. ແນວໃດກໍ່ຕາມ, ວາລະການຝຶກອົບຮົມມີຈຸດປະສົງສຳລັບພະນັກງານອົງການຈັດຕັ້ງຂອງລັດຖະບານຂັ້ນສູນກາງ ເຊິ່ງຈະກວມ ເອົາຫົວຂໍ້ ເຊັ່ນ : ວິທີການຂະແໜງການ ຈຳເປັນຕ້ອງໄດ້ປັບປຸງ. ນອກຈາກນັ້ນ, ການຮ່ວມມືກັບອົງການຜູ້ໃຫ້ທຶນອື່ນໆ ກໍມີຄວາມສຳຄັນຫຼາຍ ໃນເວລາພັດທະນາບັນດາວິທີການ ແລະ ເຄື່ອງມື ເຊັ່ນດຽວກັນກັບ ໃນເວລາຝຶກອົບຮົມຢູ່ຂັ້ນສູນກາງ. ບັນດາຫົວຂໍ້ທີ່ພັດທະນາຂື້ນໃໝ່ໃນ ພີແຄັບ 2 ມີ : ການຄຸ້ມຄອງທຶນສົມ ທົບກັບໂຄງການ ODA , ການຄຸ້ມຄອງແຜນງານ, ການຄຸ້ມຄອງການເງິນ ແລະ ງົບປະມານ ຈຳເປັນຕ້ອງ ໄດ້ສະທ້ອນໃຫ້ເຫັນຢູ່ໃນວາລະ ການຝຶກອົບຮົມທີ່ປັບປຸງໃໝ່, ສະນັ້ນ, ການສຶກສາການພັດທະນາການຝຶກອົບຮົມຢ່າງຕໍ່ເນື່ອງ ກັບກະຊວງແຜນ ການ ແລະ ການລົງທຶນ ແມ່ນມີຄວາມຈຳເປັນ.

### (3) ຂົງການຈັດຕັ້ງທີ່ພົວພັນກັບການຄຸ້ມຄອງການເງິນ ແລະ ການເບີກຈ່າຍງົບປະມານການລົງທຶນລັດ.

ຢູ່ໃນວິທີການຄຸ້ມຄອງການລົງທຶນລັດສະບັບໃໝ່ ທີ່ໄດ້ວາງແຜນໄວ້ທີ່ຈະພັດທະນາຂື້ນໃນ ພີແຄັບ 2, ວິທີການຄຸ້ມຄອງແຜນງານ ແລະ ການຈັດສັນງົບປະມານການລົງທຶນລັດ ແມ່ນໄດ້ຖືກວາງແຜນໄວ້ ເພື່ອປັບປຸງຄວາມຮັບຜິດຊອບ ຂອງກົມແຜນການ ກະຊວງແຜນການ ແລະ ການລົງທຶນ ລວມທັງການສື່ສານທີ່ໃກ້ສິດລະຫວ່າງ ກົມປະເມີນຜົນ ແລະ ກົມແຜນການ ແມ່ນມີຄວາມຈຳເປັນທີ່ຈະທົດສອບການນຳໃຊ້ບັນດາວິທີການ ແລະ ເຄື່ອງມື.

ປະຈຸບັນນີ້, ກົມແຜນການ ມີຄວາມຮັບຜິດຊອບໃນການຄຸ້ມຄອງການເງິນໂຄງການການລົງທຶນລັດ. ແນວໃດກໍຕາມ, ໃນເມື່ອການເບີກຈ່າຍຕົວຈິງ ແມ່ນຄຸ້ມຄອງໂດຍພະແນກແຜນການ ແລະ ການລົງທຶນ, ໂຄງການພີແຄັບ 2 ມີຈຸດປະສົງທີ່ຈະສືບຕໍ່ນຳໃຊ້ ພະແນກແຜນການ ແລະ ການລົງທຶນເພື່ອເຮັດການປັບປຸງວິທີການຂອງເຂົາເຈົ້າ. ໃນເມື່ອຄວາມຮັບຮູ້ຕໍ່ການຄຸ້ມຄອງການເງິນ ແລະ ການເບີກຈ່າຍງົບປະມານການລົງທຶນລັດຍັງຕ່ຳ, ມັນມີຄວາມຈຳເປັນຫຼາຍ ທີ່ຈະອະທິບາຍ ແລະ ແລກປ່ຽນຄວາມເປັນມາຂອງມັນ ພ້ອມກັບຜົນສະທ້ອນຂອງມັນຕໍ່ວຽກງານການຄຸ້ມຄອງການລົງທຶນລັດໂດຍລວມ.

## 1.5 ການສົ່ງຊ່ຽວຊານຍີ່ປຸ່ນມາເຮັດວຽກ

| Position | Name | First Year (2008) | | | | | | M/M | |
|---|---|---|---|---|---|---|---|---|---|
| | | 2008 | | | | | | 2008 First Year | |
| | | March | April | May | June | July | August | Laos | Japan |
| Chief Advisor | Ichiro Okumura | 3/28 | | 95 | | 6/30 | 8/1 8/30 30 | 4.17 | 0.00 |
| Program Management | Hiromi Osada | 3/28 | 33 4/29 | | | | | 1.10 | 0.00 |
| Budget Planning | Atsushi Tokura | | | | 6/17 | 7/16 30 | | 1.00 | 0.00 |
| Budget Disbursement | Hirofumi Azeta | | | | 6/14 | 48 7/31 | 8/5 8/31 27 (Total: 75) | 2.50 | 0.00 |
| Meta Evaluation/ Training Development | Tomoe Taira | 3/28 | | 102 | | 7/7 | | 3.40 | 0.00 |
| Project Coordination | Kazumi Nakamura | | 4/19 30 | 5/18 | | | 8/1 8/30 30 | (2.00) | 0.00 |
| | | | | | | | | 12.17 | 0.00 |

## 2. ຄວາມຄືບໜ້າຂອງການບັນລຸຈຸດປະສົງໂຄງການ.

ເຖິງແມ່ນວ່າ ມັນເປັນການຍາກທີ່ຈະຄາດຄະເນເຖິງການບັນລຸຈຸດປະສົງຂອງໂຄງການພາຍຫຼັງປີທີໜຶ່ງຂອງໂຄງການຫາກໍ່ສຳເລັດ, ແຕ່ສາມາດເວົ້າໄດ້ວ່າຄວາມເປັນໄປໄດ້ແມ່ນສູງ ຍ້ອນຄວາມເອົາໃຈໃສ່ຍາມຢ່າງຫ້າວຫັນ ຂອງກະຊວງແຜນການ ແລະ ການລົງທຶນໃນໄລຍະທີໜຶ່ງ ແລະ ການສະໜັບສະໜູນຢ່າງແຂງແຮງຈາກລັດຖະບານຂັ້ນສູນກາງ ແລະ ທ້ອງຖິ່ນ. ໂຄງການ ກໍເປັນທີ່ຮັບຮູ້ຕໍ່ໂຄງການຂອງອົງການຜູ້ໃຫ້ທຶນອື່ນໆ. ກ່ອນຮອດທ້າຍປີ ທີ 2, ຄູ່ມືສະບັບທຳອິດໄດ້ພັດທະນາຂຶ້ນ ແລະ ວາລະຂອງການຝຶກອົບຮົມສຳເລັດຕາມກຳນົດເວລາ, ດັ່ງນັ້ນ, ຈຶ່ງຈະສາມາດປະເມີນລະດັບຄວາມສຳເລັດຂອງການໄດ້.

## 3. ໂຄງຮ່າງຂອງການປະຊຸມ

ໃນໄລຍະປີທຳອິດ, ກອງປະຊຸມສຳມະນາເປີດຕົວພີແຄັບ 2 ແລະ ກອງປະຊຸມຄະນະກຳມະການປະສານງານ ຮ່ວມຄັ້ງທີ 1 ໄດ້ຈັດຂຶ້ນທີ່ສູນກາງການຮ່ວມມືສາກົນ ແລະ ການຝຶກອົບຮົມ ໃນວັນທີ 21 ພຶດສະພາ 2008.

ຕໍ່ໄປນີ້ແມ່ນຊີ້ບອກເຖິງ ໂຄງຮ່າງຂອງທັງສອງກອງປະຊຸມ.

### (1) ການປະຊຸມສຳມະນາເປີດຕົວໂຄງການ ພີແຄັບ 2

| | |
|---|---|
| ບັນດາຜູ້ເຂົ້າຮ່ວມ | ພະນັກງານແຜນການຈາກອົງການຂອງລັດຖະບານຂັ້ນສູນກາງ, ພະນັກງານອົງການຜູ້ໃຫ້ທຶນ, ພະນັກງານພະແນກແຜນການ ແລະ ການລົງທຶນຈາກ ແຂວງ ຄຳມ່ວນ, ສາລະວັນ ແລະ ອຸດົມໄຊ , ເຊິ່ງແມ່ນແຂວງເປົ້າໝາຍຂອງ ພີແຄັບ.<br>ລວມທັງໝົດ 26 ທ່ານ |
| ບັນດາເນື້ອໃນ | ➢ ບັນດາໝາກຜົນຂອງ ພີແຄັບ ( ໄລຍະທຳອິດ ) ແລະ ຄວາມຈຳເປັນໃນການສືບຕໍ່ປັບປຸງການຄຸ້ມຄອງ ການລົງທຶນລັດ.<br>➢ ຈຸດປະສົງ ແລະ ແຜນກິດຈະກຳຂອງ ພີແຄັບ 2.<br>➢ ບັນດາເນື້ອໃນຂອງບັນດາວາລະການຝຶກອົບຮົມ ທີ່ໄດ້ວາງແຜນໄວ້ ສຳລັບ ພີແຄັບ 2.<br>➢ ຂໍ້ສະເໜີສຳລັບການຮ່ວມມື ເພື່ອການຄຸ້ມຄອງ ການລົງທຶນລັດທີ່ດີກວ່າ ແລະ ຄວາມສຳເລັດຢູ່ໃນໂຄງການ. |

### (2) ກອງປະຊຸມຄະນະກຳມະການປະສານງານຮ່ວມຄັ້ງທີ 1

| | |
|---|---|
| ບັນດາຜູ້ເຂົ້າຮ່ວມ | ຜູ້ອຳນວຍການໂຄງການ, ຜູ້ບໍລິຫານໂຄງການ, ຮອງຜູ້ຕາງໜ້າອົງການໄຈກາປະຈຳລາວ, ພະນັກງານສະຖານທູດຍີ່ປຸ່ນ, ພະນັກງານກົມປະເມີນຜົນ, ກົມແຜນການ ແລະ ກົມຮ່ວມມືສາກົນ ກະຊວງແຜນການ ແລະ ການລົງທຶນ<br>ລວມທັງໝົດ 37 ທ່ານ |
| ບັນດາເນື້ອໃນ | ➢ ການປະເມີນຜົນບັນດາໝາກຜົນ ຂອງ ພີແຄັບ<br>➢ ການຮັບຮອງເອົາຈຸດປະສົງຂອງໂຄງການ ພີແຄັບ 2 ແລະ ບັນດາກິດຈະກຳ ໃນປີທຳອິດ<br>➢ ບັນລຸພັນທະ ຂອງອົງການຈັດຕັ້ງຮ່ວມງານຕ່າງໆ ຕໍ່ ພີແຄັບ 2 |

## 4. ອຸປະກອນທີ່ຊື້ມາຮັບໃຊ້ ໃຫ້ແກ່ໂຄງການ

ລຸ່ມນີ້ ແມ່ນລາຍການອຸປະກອນທີ່ຊື້ມາຮັບໃຊ້ໃຫ້ແກ່ໂຄງການ.

| ລາຍການ | ການນຳໃຊ້ |
|---|---|
| ເຄື່ອງກອບປີ້ເອກະສານ | ກະກຽມເອກະສານສຳລັບການຝຶກອົບຮົມ ແລະ ສຳມະນາ |
| Notebook PC | ເພື່ອອຳນວຍຄວາມສະດວກໃຫ້ແກ່ການເຄື່ອນໄຫວວຽກງານ ຂອງຜູ້ປະສານງານ ຈາກ ຜທ ແລະ ທີມງານຂອງໂຄງການຄົນອື່ນໆ. |
| ເຄື່ອງພິມເອກະສານ | ຮັບໃຊ້ໃຫ້ແກ່ຫ້ອງການຂອງຜູ້ປະສານງານ ພີແຄັບ 2 |
| ເຄື່ອງພິມຂະໜາດນ້ອຍ | ພິມເອກະສານທີ່ຈຳເປັນໃນເວລາລົງເຮັດວຽກຢູ່ເຂດຫ່າງໄກສອກຫຼີກ. |
| ກ້ອງຖ່າຍຮູບ ດີຈີຕອລ | ເພື່ອບັນທຶກພາບການເຄື່ອນໄຫວຕ່າງໆ ໃນເວລາ ສຳມະນາ ແລະ ຝຶກອົບຮົມ. |

## 5. ບັນດາເອກະສານທີ່ເກັບກຳໄດ້

ລຸ່ມນີ້ ແມ່ນເອກະສານທີ່ ພົວພັນກັບການຄຸ້ມຄອງການລົງທຶນລັດ ທີ່ເກັບກຳໄດ້ ເພື່ອຮັບໃຊ້ໃຫ້ແກ່ໂຄງການ.

| ລາຍການເອກະສານ | ເນື້ອໃນ |
| --- | --- |
| ວາລະສານທາງການ | ການບໍລິຫານງົບປະມານງົບປະມານສົກປີ 05/06 ແລະ ແຜນລາຍຈ່າຍ ສົກປີ 05/06. |
| ແຜນພັດທະນາເສດຖະກິດ-ສັງຄົມ 07-08 ຂອງ ແຂວງ ຄຳມ່ວນ | ແຜນຈັດຕັ້ງປະຕິບັດການລົງທຶນລັດຂອງ ແຂວງຄຳມ່ວນ |
| ແຜນພັດທະນາເສດຖະກິດ-ສັງຄົມ 07-08 ຂອງ ແຂວງ ອຸດົມໄຊ | ແຜນຈັດຕັ້ງປະຕິບັດການລົງທຶນລັດຂອງ ແຂວງ ອຸດົມໄຊ |
| ບົດລາຍງານກາງສະໄໝຂອງແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ 6 ( 06-10) | ບົດລາຍງານກາງສະໄໝ ຂອງແຜນພັດທະນາເສດຖະກິດສັງຄົມ ທີ່ຍື່ນຕໍ່ສະພາແຫ່ງຊາດ ເດືອນ ກໍລະກົດ 2008. |
| ບົດແນະນຳກ່ຽວກັບການສ້າງແຜນພັດທະນາເສດຖະກິດ-ສັງຄົມ 08/09 | ບົດແນະກ່ຽວກັບການສ້າງແຜນງົບປະມານສຳລັບ ສົກປີ 08/09. |
| ຂໍ້ຕົກລົງຂອງລັດຖະມົນຕີວ່າການກະຊວງການເງິນວ່າດ້ວຍການ ຮັບຮອງເອົາສາລະບານບັນຊີ-ງົບປະມານ ສະບັບປັບປຸງ. | ສາລະບານງົບປະມານ ແລະ ຂໍ້ຕົກລົງ ( ແຈ້ງການ ) ກ່ຽວກັບການຈັດຕັ້ງປະຕິບັດສາລະບານບັນຊີໃໝ່ ອອກໂດຍກະຊວງການເງິນ. |
| ຮ່າງເບື້ອງຕົ້ນຂອງກົດໝາຍການລົງທຶນລັດ | ຮ່າງເບື້ອງຕົ້ນ ກົດໝາຍການລົງທຶນລັດ ຂອງ ສປປລາວ. |
| ຂໍ້ຕົກລົງວ່າດ້ວຍພາລະບົດບາດ, ສິດ, ໜ້າທີ່ ແລະ ຂອບເຂດ ການເຄື່ອນໄຫວຂອງສູນຝຶກອົບຮົມ. | ຂໍ້ຕົກລົງທີ່ກຳນົດພາລະບົດບາດ ແລະ ໜ້າທີ່ຂອງ ສູນຝຶກອົບຮົມ ກະຊວງແຜນການ ແລະ ການລົງທຶນ. |
| ດຳລັດການຈັດຕັ້ງປະຕິບັດກົດໝາຍງົບປະມານ. | ດຳລັດການຈັດຕັ້ງປະຕິບັດກົດໝາຍງົບປະມານ ອອກໂດຍກະຊວງການເງິນ. |
| ແຜນພັດທະນາເສດຖະກິດ-ສັງຄົມສົກປີ 2006-2010 ຂອງ ຫວຽດນາມ. | ໂຄງຮ່າງແຜນພັດທະນາ 5 ປີ ຂອງຫວຽດນາມ. |
| ຮ່າງກົດໝາຍການຄຸ້ມຄອງການລົງທຶນລັດ ຂອງ ຫວຽດນາມ. | ຮ່າງ ທີ່ຈະຜ່ານສະພາແຫ່ງຊາດ ໃນເດືອນ ພະຈິກ 2008. |

## 6. ໜ້າວຽກຕົ້ນຕໍ ທີ່ຈະຕ້ອງໄດ້ສຳເລັດໃນປີ ທີ 2

### [ໝາກຜົນ 1] ການຝຶກອົບຮົມ ແລະ ການຝຶກກັບໜ້າວຽກ

✧ **ສ້າງຕັ້ງລະບົບການຝຶກອົບຮົມ**

ປີທີ່ 2 ແມ່ນເນັ້ນເຖິງການສ້າງຕັ້ງລະບົບການຝຶກອົບຮົມ ລວມເຖິງໂຄງຮ່າງການຈັດຕັ້ງຢູ່ພາຍໃນກະຊວງ

ແຜນການ ແລະການລົງທຶນ. ທ່ານ ວິໄຊ ຊາວັນນາ, ຫົວໜ້າກົມປະເມີນຜົນ ແນະນຳຄວາມເປັນໄປໄດ້ຂອງການມອບໝາຍສ່ວນໜຶ່ງຂອງໜ້າທີ່ການຝຶກອົບຮົມຂອງກົມປະເມີນຜົນ ໄປໃຫ້ສູນຝຶກອົບ ຮົມຂອງກະຊວງ ເພື່ອຮັບປະກັນເຖິງຄວາມຍືນຍົງເວລາການຈັດຕັ້ງປະຕິບັດການຝຶກອົບຮົມ. ສະນັ້ນ, ພີແຄັບ 2 ຈະສຶກສາເຖິງຄວາມເປັນໄປໄດ້ຂອງສູນຝຶກດັ່ງກ່າວ ແລະ ພິຈາລະນາເຖິງຄວາມເປັນໄປໄດ້ໃນ ການຮ່ວມມືກັບກົມປະເມີນຜົນຢູ່ໃນແຜນລະອຽດໃດໜຶ່ງ.

**[ໝາກຜົນ 2-1] ການຈັດສັນງົບປະມານການລົງທຶນລັດ**

✧ **ຮ່າງວິທີການ ແລະ ເຄື່ອງມືການວາງແຜນງົບປະມານການລົງທຶນລັດ.**

ສຳລັບວຽກງານການຈັດສັນງົບປະມານການລົງທຶນລັດ, ຊ່ຽວຊານທີ່ຮັບຜິດຊອບຈະສຳເລັດຮ່າງສະບັບທຳອິດຂອງບັນດາວິທີການ ແລະ ເຄື່ອງມື. ຫຼັງຈາກການທົດສອບການນຳໃຊ້ບັນດາເຄື່ອງມື ແລະ ວິທີການດັ່ງກ່າວທີ່ສ້າງຂື້ນແລ້ວ ຈຶ່ງຈະໄດ້ສຶກສາເຖິງຊ່ອງທາງທີ່ມີປະສິດທິຜົນທີ່ສຸດ ໃນການກະຈາຍບັນດາວິທີການ ແລະ ເຄື່ອງມື.

✧ **ການເຈະລະຈາຕໍ່ລອງກ່ຽວກັບງົບປະມານການລົງທຶນລັດກັບບັນດາແຂວງ ແລະ ກະຊວງ.**

ຄຽງຄູ່ກັບບົດແນະນຳທີ່ກ່າວຂ້າງເທິງແລ້ວ, ຂັ້ນຕອນທີ່ເປັນມາດຕະຖານ ຂອງການກະກຽມສຳລັບການເຈລະຈາຕໍ່ລອງງົບປະມານການລົງທຶນລັດ ກັບພະນັກງານກະຊວງ ແລະ ແຂວງ ກໍຈະໄດ້ຮັບການພັດທະນາຂື້ນ ເພື່ອເປັນເຄື່ອງມືໃຫ້ແກ່ກະຊວງແຜນການ ແລະ ການລົງທຶນ.

**[ໝາກຜົນ 2-2] ການຄຸ້ມຄອງການເງິນ ແລະ ການເບີກຈ່າຍງົບປະມານໂຄງການລົງທຶນລັດ.**

✧ **ການຕິດຕາມກວດກາການເບີກຈ່າຍງົບປະມານການລົງທຶນລັດ.**

ຊ່ຽວຊານທີ່ຮັບຜິດຊອບການເບີກຈ່າຍງົບປະມານການລົງທຶນລັດ ຈະເດີນທາງໄປບາງແຂວງ ເພື່ອສຶກສາເບິ່ງສະພາບການ ກ່ຽວກັບ ” ການຈ່າຍເກີນງົບທີ່ອະນຸມັດ “ ເຊິ່ງເປັນອາການໜຶ່ງທີ່ບົ່ງບອກເຖິງການເພີ່ມຂື້ນຂອງໜີ້ສິນການລົງທຶນລັດ ແຕ່ຈົດເຂົ້າເປັນໂຄງການສືບຕໍ່. ຢູ່ໃນຂັ້ນຕອນຂອງການສຶກສາ, ຊ່ຽວຊານຈະຮັບປະກັນໃຫ້ໄດ້ແລກປ່ຽນປະເດັນຕ່າງໆ ລະຫວ່າງ ກະຊວງແຜນການ ແລະ ການລົງທຶນ ແລະ ອົງການຈັດຕັ້ງຂອງແຂວງ ແລະ ນອກຈາກນັ້ນ ຍັງຈະໄດ້ຊອກຫາຄວາມເປັນໄປໄດ້ຂອງການສ້າງກອບວຽກຂອງການຕິດຕາມກວດກາ.

✧ **ສຶກສາເຖິງມາດຕະການແກ້ໄຂບັນຫາໜີ້ຂອງການລົງທຶນລັດ ທີ່ໄດ້ລະບຸເປັນໂຄງການສືຕໍ່.**

ການສຶກສາເພື່ອຊອກຫາບັນດາໂຄງການ ທີ່ໃນຄວາມເປັນຈິງແມ່ນ ໜີ້, ແຕ່ຈົດເຂົ້າເປັນໂຄງການສືບຕໍ່ ( ໂຄງການລົງທຶນລັດທີ່ຍັງສືບຕໍ່ເປັນໜີ້ ) ຈະຖືກດຳເນີນ. ປຶກສາຫາລືກ່ຽວກັບມາດຕະການແກ້ໄຂກັບກະຊວງແຜນການ ແລະ ການລົງທຶນ ແລະ ພະແນກແຜນການ ແລະ ການລົງທຶນ ເຮັດແນວໃດ ເພື່ອຫຼຸດຜ່ອນບັນຫາດັ່ງກ່າວລົງ.

✧ **ການສຶກສາກ່ຽວກັບໂຄງການທີ່ເອກະຊົນລົງທຶນກ່ອນ ( ປາສະຈາກງົບປະມານ )**

ຈະໄດ້ເຮັດການສຶກສາເຖິງສະພາບຂອງການລົງທຶນລັດໃນປະຈຸບັນ ທີ່ບໍ່ມີໃນແຜນ ຫຼື ງົບປະມານ . ການປຶກສາຫາລືໃນເລື້ອງນີ້ ແມ່ນມີແຜນຈະຈັດຂື້ນລະຫວ່າງ ກະຊວງແຜນການ ແລະ ການລົງທຶນ ແລະ ອຳນາດການປົກຄອງທ້ອງຖິ່ນ ເພື່ອຫຼີກລ້ຽງກໍລະນີດັ່ງກ່າວ.

**[ໝາກຜົນ 3] ການໃຫ້ຄຳປຶກສາແກ່ການຮ່າງກົດໝາຍການຄຸ້ມຄອງການລົງທຶນລັດ.**

✧ **ສະໜັບສະໜູນເພື່ອໃຫ້ກົດໝາຍການລົງທຶນລັດ ໄດ້ຮັບການຮັບຮອງ.**

ກະຊວງແຜນການ ແລະ ການລົງທຶນ ມີຈຸດປະສົງເພື່ອເຮັດໃຫ້ກົດໝາຍການຄຸ້ມຄອງການລົງທຶນລັດທີ່ຈະອອກໃໝ່ ໄດ້ຮັບການຮັບຮອງ ໃນວາລະກອງປະຊຸມສະພາແຫ່ງຊາດໃນເດືອນ ທັນວາ 2008. ດັ່ງນັ້ນ, ພີແຄັບ 2 ຕ້ອງໄດ້ໃຫ້ຄຳປຶກສາຫາລືທັນທີ ພາຍຫຼັງເລີ່ມປີທີ 2 ຂອງໂຄງການ. ໂດຍການຄາດຄະເນວ່າ ກົດໝາຍການຄຸ້ມຄອງການລົງທຶນລັດ ໄດ້ຮັບການຮັບຮອງ, ການຕິດຕາມການຈັດຕັ້ງປະຕິບັດກົດໝາຍ ທີ່ລວມມີທັງການສຶກສາເຖິງການຮ່າງດຳລັດການຈັດຕັ້ງປະຕິບັດກົດໝາຍ ຈຳເປັນຕ້ອງມີການປຶກສາຫາລືກັນຢູ່ພາຍໃນ.

**[ໝາກຜົນ 4] ການປັບປຸງບັນດາວິທີການການຄຸ້ມຄອງການລົງທຶນລັດ.**

✧ **ການຮຽບຮຽງຄືນບັນດາປື້ມຄູ່ມື ແລະ ປື້ມແນະນຳ.**

ຢູ່ໃນປີທີ 2 ຂອງ ພີແຄັບ 2, ບັນດາປື້ມຄູ່ມື ແລະ ປື້ມແນະນຳ ທີ່ໄດ້ຮັບການພັດທະນາຂື້ນຢູ່ໃນ ພີແຄັບ ຈະໄດ້ຮັບການດັດແກ້ຄືນ ໂດຍການບັນຈຸວິທີການ ແລະ ເຄື່ອງມືໃໝ່ຂອງວຽກງານການຄຸ້ມຄອງທຶນສົມທົບກັບທຶນຊ່ວຍເຫຼືອ, ການຄຸ້ມຄອງໂຄງການລົງທຶນລັດຢູ່ຂັ້ນເມືອງ ແລະ ການຄຸ້ມຄອງແຜນງານ. ສະບັບດັດແກ້ດັ່ງກ່າວນີ້ ຄາດວ່າຈະສຳເລັດກ່ອນເດືອນ ສິງຫາ 2009. ດັ່ງນັ້ນ, ບັນດາວິທີການ ແລະ ເຄື່ອງມືໃໝ່ ຈະຕ້ອງໄດ້ຮັບການພັດທະນາຂື້ນ ກ່ອນເດືອນ ມັງກອນ 2009 ໃນຂະນະທີ່ການສຶກສາການ ທົດສອບນຳໃຊ້ ຈະຖືກດຳເນີນຢູ່ບັນດາສະຖານທີ່ ທີ່ເລືອກໄວ້ ຈາກເດືອນ ກຸມພາ ປີ 2009.

✧ **ການປະສານສົມທົບກັບບັນດາໂຄງການຂອງຜູ້ໃຫ້ທຶນອື່ນໆ.**

ນອກຈາກ 3 ໂຄງການຂອງຜູ້ໃຫ້ທຶນອື່ນໆ ພາຍໃຕ້ຄວາມຮັບຜິດຊອບຂອງກະຊວງແຜນການ ແລະ ການລົງທຶນ ຄືດັ່ງໄດ້ກ່າວໄວ້ໃນຂໍ້ 9 ແລ້ວ, ໂຄງການປັບປຸງ ແລະ ບູລະນະການປົກຄອງ (GPAR) ໂດຍອົງການປົກຄອງ ແລະ ຄຸ້ມຄອງລັດຖະກອນ (PACSA) ຂຶ້ນກັບສຳນັກງານນາຍົກລັດຖະມົນຕີ ເຊິ່ງສະໜັບສະໜູນໂດຍອົງການ UNDP ຍັງມີທ່າແຮງທີ່ຈະພົວພັນຢ່າງໃກ້ສິດກັບ ພີແຄັບ 2 ຍ້ອນບົດບາດການປະຕິຮູບການປົກຄອງຂອງເຂົາເຈົ້າ ໂດຍສະເພາະ ແມ່ນຢູ່ຂັ້ນແຂວງ. ຫຼັງຈາກການເຂົ້າໃຈເຖິງໂຄງຮ່າງ ແລະ ບັນດາໝາກຜົນຂອງໂຄງການ, ຍັງມີຄວາມຈຳເປັນທີ່ຈະສຶກສາເຖິງ ຄວາມແຕກຕ່າງ ລະຫວ່າງ GPAR ແລະ PCAP 2, ແລະ ຄວາມເປັນໄປໄດ້ຂອງ *ກ.* ການແລກປ່ຽນເຄື່ອງມືອຸປະກອນ, *ຂ.* ການຮ່ວມກິດຈະກຳນຳກັນ, ແລະ *ຄ.* ການຮ່ວມກັນພັດທະນາວິທີການ ແລະ ເຄື່ອງມື ກໍຕ້ອງປຶກສາກັນ ເພື່ອການບັນລຸບັນດາໝາກຜົນຂອງໂຄງການຂອງໃຜລາວ.

✧ **ການນຳໃຊ້ເຄືອຄ່າຍລະຫວ່າງ ຊ່ຽວຊານຍີ່ປຸ່ນດ້ວຍກັນ.**

ພາຍໃຕ້ການລິເລີ່ມຂອງອົງການ ໄຈກາ ປະຈຳລາວ, ຊ່ຽວຊານ ຍີ່ປຸ່ນ ຫຼາຍທ່ານ ທີ່ຖືກແຕ່ງຕັ້ງໄປປະຈຳຢູ່ບາງກະຊວງ ແລະ ອົງການທີ່ສຳຄັນ ແລະ ໄດ້ມີການແລກປ່ຽນຂໍ້ມູນຂ່າວສານທີ່ເປັນປະໂຫຍດນຳກັນຢ່າງຕໍ່ເນື່ອງ. ໂຄງການ ພີແຄັບ 2 ກໍມີຄວາມຕັ້ງໃຈ ທີ່ຈະເຂົ້າຮ່ວມໃນເຄືອຄ່າຍດັ່ງກ່າວຢ່າງຕັ້ງໜ້າ ເພື່ອແລກປ່ຽນຂໍ້ມູນທີ່ເປັນປະໂຫຍດກ່ຽວກັບການລົງທຶນລັດ ຢູ່ບັນດາກະຊວງຕົ້ນຕໍ. ໂດຍສະເພາະແມ່ນຢູ່ໃນຂັ້ນຂອງການພັດທະນາວິທີການ ຢູ່ໃນຂົງເຂດການຄຸ້ມຄອງແຜນງານຂອງຂະແໜງການ ແລະ ການຄຸ້ມຄອງການເງິນໂຄງການລົງທຶນລັດ ຈະໄດ້ຮັບຄຳປຶກສາຈາກຊ່ຽວຊານຍີ່ປຸ່ນ.

ເອກະສານຊ້ອນທ້າຍ 1

## ບັນດາປະເດັນທີ່ໄດ້ພົບເຫັນໃນເວລາເດີນທາງໄປສຶກສາຂໍ້ມູນຢູ່ແຂວງ ຄໍາມ່ວນ.

**ກະຊວງແຜນການ ແລະ ການລົງທຶນ ແລະ ທີມງານ ຂອງ ພີແຄັບ 2**
ກໍລະກົດ 2008

### 1. ການປະເມີນໂຄງການ

#### (1) ບົດສະເໜີໂຄງການ

ບົດສະເໜີໂຄງການ ຄວນຕ້ອງໄດ້ປະຕິບັດຕາມບົດແນະນໍາຂອງກະຊວງແຜນການ ແລະ ການລົງທຶນ ແລະ ບູລະມະສິດຂອງລັດຖະບານ. ໃນຄວາມເປັນຈິງ, ບາງໂຄງການໄດ້ມີການປະຕິບັດກ່ອນ ໂດຍເຈົ້າຂອງໂຄງການ ແລະ ຜູ້ຮັບເໝົາ ໂດຍບໍ່ໄດ້ຮັບອະນຸມັດຈາກພະແນກແຜນການ ແລະ ການລົງທຶນ ແລະ ເຈົ້າແຂວງ ແລະ ຂາດແຫຼ່ງງົບປະມານທີ່ຊັດເຈນ. ຫຼັງຈາກນັ້ນ, ເຈົ້າຂອງໂຄງການ, ບາງຄັ້ງ, ສະເໜີມາຫາພະແນກແຜນການ ແລະ ການລົງທຶນເພື່ອໃຫ້ຊໍາລະ ໂດຍມີຄໍາເຫັນຈາກອໍານາດການປົກຄອງທ້ອງຖິ່ນ.

#### (3) ການປະເມີນແບບປຽບທຽບ

ການຝຶກອົບຮົມຂອງ ພີແຄັບ ຫາກໍ່ມີຂຶ້ນໃນປີຜ່ານມາ ແລະ ການປະເມີນແບບສົມທຽບ ຍັງບໍ່ທັນໄດ້ນໍາໃຊ້ກັນ ຢ່າງກວ້າງຂວາງເທື່ອ. ເມື່ອການປະເມີນແບບສົມທຽບ ແມ່ນເຄື່ອງມືທີ່ເໝາະສົມ ເພື່ອຄັດເລືອກໂຄງການຢ່າງ ພາວະວິໃສ, ການພະຍາຍາມຢ່າງຕໍ່ເນື່ອງ ແມ່ນຈໍາເປັນທີ່ສຸດໃນການນໍາໃຊ້ການປະເມີນ.

#### (4) ເພດານງົບປະມານ

ງົບປະມານທີ່ທາງແຂວງສະເໜີຂຶ້ນມາແມ່ນສູງກວ່າງົບປະມານທີ່ໄດ້ແບ່ງປັນ ເກືອບ 200%, ບັນຫາຕົ້ນຕໍແມ່ນຍ້ອນເພດານງົບປະມານຂອງສົກປີ 08/09 ບໍ່ໄດ້ແຈ້ງໄປກ່ອນ. ສະນັ້ນ, ທັງບັນດາແຂວງ ແລະກະຊວງແຜນການ ແລະ ການລົງທຶນ ໃຊ້ເວລາຫຼາຍ ໃນການສັງລວມບົດສະເໜີ ແລະ ການຄັດເລືອກໂຄງການ. ເພດານງົບປະມານຄວນໄດ້ຮັບການແຈ້ງການກ່ອນທາງແຂວງກະກຽມໂຄງການ ຈຶ່ງຈະເຮັດໃຫ້ແຂວງ ແລະ ກະຊວງແຜນການ ແລະ ການລົງທຶນ ມີເວລາຫຼາຍ ໃນການປຶກສາຫາລືກ່ຽວກັບການຄັດເລືອກເອົາໂຄງການ. ດີແທ້, ກະຊວງແຜນການ ແລະ ການລົງທຶນ ຄວນແຈ້ງເພດານງົບປະມານທີ່ລະບຸງົບປະມານຂອງປີຖັດໄປ ກ່ອນແຂວງກະກຽມບົດສະເໜີໂຄງການ.

(5) ການວາງແຜນງົບປະມານ/ການປະມານຄ່າ

ໃນເວລາສໍາພາດ ໄດ້ຮັບຂໍ້ມູນວ່າ ການຈັດສັນງົບປະມານ ບໍ່ໄດ້ຮັບປະກັນເຖິງການເບີກຈ່າຍລາຍການງົບປະມານທັງໝົດ ຍ້ອນວ່າ ຂາດເຂີນເງິນສົດໃນຄັງ. ສາເຫດໜຶ່ງອາດ ແມ່ນຍ້ອນລາຍຮັບອາກອນຕົວຈິງຕໍ່າກວ່າຕົວ ເລກທີ່ຄາດຄະເນໄວ້.ໃນກໍລະນີດັ່ງກ່າວ, ເຖິງວ່າ ຜູ້ຮັບເໝົາສໍາເລັດໂຄງການຕາມກໍານົດເວລາ ແລະ ຕາມງົບປະມານທີ່ມີໃນແຜນ, ສ່ວນໃດສ່ວນໜຶ່ງຂອງສັນຍາບໍ່ຖືກຊໍາລະ. ງົບປະມານບໍ່ໄດ້ຮັບການຈັດສັນເພື່ອຊໍາລະໃຫ້ໂຄງການ ໃດໜຶ່ງໃນ ສົກປີງົບປະມານປະຈຸບັນ ແລະ ຍົກໄປປີງົບປະມານສົກປີຖັດໄປ.

ມັນມີຄວາມສໍາຄັນຕໍ່ແຂວງ ໃນການສ້າງແຜນງົບປະມານການລົງທຶນ ໃຫ້ໄປຕາມການຄາດຄະເນລາຍຮັບອາກອນ. ແນວໃດກໍຕາມ, ການຄາດຄະເນງົບປະມານໂຄງການທີ່ຊັດເຈນເປັນສິ່ງທີ່ຈໍາເປັນ. ຢູ່ໃນ ພີແຄັບ 2, ແບບຟອມ ສໍາລັບການປະເມີນໂຄງການສາມາດດັດແກ້ຄືນ.

2. ການຄຸ້ມຄອງ ແລະ ການຕິດຕາມກວດກາໂຄງການ

(1) ການແກ່ຍາວກິດຈະກໍາໂຄງການ

ເຖິງແມ່ນວ່າ ທຸກໂຄງການຄວນຕ້ອງໄດ້ດໍາເນີນໄປຕາມແຜນຂອງເຂົາເຈົ້າທີ່ກໍານົດໄວ້, ແຕ່ບາງຄັ້ງແຜນການດໍາເນີນງານບໍ່ໄດ້ຮັບການຈັດຕັ້ງປະຕິບັດ. ການແກ່ຍາວດັ່ງກ່າວ ອາດສົ່ງຜົນກະທົບຕໍ່ກະແສເງິນສົດ ຂອງງົບປະມານການລົງທຶນລັດ. ເຈົ້າຂອງໂຄງການມີຄວາມຈໍາເປັນຕ້ອງໄດ້ຊອກຮູ້ສາເຫດກ່ອນ.

(2) ຂັ້ນຕອນການປະມູນ

ການຄັດເລືອກ ຂ້ອນຂ້າງບໍ່ມີຄວາມໂປ່ງໃສ, ຍ້ອນວ່າບົດສະເໜີທາງການເງິນເປີດກ່ອນບົດສະເໜີທາງດ້ານເຕັກນິກ. ໃນກໍລະນີນີ້, ມູນຄ່າສັນຍາ ຈະສູງກວ່າ ມູນຄ່າຕໍ່າສຸດຂອງມູນຄ່າປະມູນ, ເຊິ່ງຈະກະທົບເຖິງງົບປະມານຂອງລັດຖະບານ.

(3) ການຕິດຕາມກວດກາໂຄງການ

ຢູ່ຂັ້ນແຂວງ, ການຕິດຕາມກວດກາໂຄງການ ເພື່ອເບິ່ງຄວາມຄືບໜ້າຂອງການກໍ່ສ້າງຍັງອ່ອນ. ການຕິດຕາມກວດກາລວມມີ ຄວາມຄືບໜ້າຂອງວຽກ, ເວລາ, ຄຸນນະພາບ ແລະ ການໃຊ້ຈ່າຍງົບປະມານຈໍາເປັນຕ້ອງໄດ້ດໍາ ເນີນໂດຍເຈົ້າຂອງໂຄງການ ຢ່າງທັນກັບກໍານົດເວລາ ແລະ ລາຍງານສົ່ງໃຫ້ ພະແນກແຜນການ ແລະ ການລົງ ທຶນເປັນແຕ່ລະໄລຍະ.

ພະແນກແຜນການ ແລະ ການລົງທຶນບໍ່ມີພະນັກງານພຽງພໍ ແລະ ຂາດເຂີນງົບປະມານ ເພື່ອດຳເນີນການ ປະ ເມີນການລາຍງານການຕິດຕາມໂຄງການ. ຄວາມສາມາດໃນການປະເມີນຂອງພະນັກງານພະແນກ ແຜນການ ແລະ ການລົງທຶນ ຍັງບໍ່ທັນໄດ້ຮັບການພັດທະນາຢ່າງແຂງແຮງ ຍ້ອນວ່າການຝຶກອົບຮົມຂອງ ພີແຄັບ ຫາກໍ່ ເລີ່ມຂຶ້ນໃນປີກາຍນີ້. ການສະໜັບສະໜູນຢ່າງຕໍ່ເນື່ອງ ແມ່ນມີຄວາມຈຳເປັນ.

**(4) ການຕິດຕາມກວດກາການເງິນ ແລະ ການຄາດຄະເນລາຍຈ່າຍ.**

ການຕິດຕາມກວດກາການເງິນ ກໍແມ່ນອີກ ປະເດັນໜຶ່ງ ທີ່ເຈົ້າຂອງໂຄງການຕ້ອງໄດ້ເອົາໃຈໃສ່. ຖ້າການ ຕິດຕາມກວດກາໂຄງການໄດ້ຮັບການດຳເນີນຢ່າງເໝາະສົມ, ການໃຊ້ຈ່າຍງົບປະມານເກີນເງິນອະນຸມັດ ອາດຈະມີໜ້ອຍ.

ການຄາດຄະເນລາຍຈ່າຍ ທີ່ສ້າງຂຶ້ນໂດຍອີງໃສ່ມູນຄ່າຂອງສັນຍາ ແລະ ແຜນລາຍຈ່າຍເບື້ອງຕົ້ນ ແລະ ການຄາດຄະເນບາງຄັ້ງ ຈຳເປັນຕ້ອງໄດ້ດັດແກ້ ໃນປີງົບປະມານປະຈຸບັນ. ເຈົ້າຂອງໂຄງການ ຄວນເກັບ ກຳຂໍ້ມູນ ກ່ຽວກັບຄ່າ ໃຊ້ຈ່າຍຂອງໂຄງການ ແລະ ລາຍງານຕໍ່ພະແນກແຜນການ ແລະ ການລົງທຶນເປັນແຕ່ ລະໄລຍະ.

ໃນເວລາຄາດຄະເນລາຍຈ່າຍ, ໂດຍສະເພາະແມ່ນເຄິ່ງເວລາທີສອງຂອງສົກງົບປະມານ ແມ່ນ ໄດ້ມີການ ປຶກສາ ຫາລືຢູ່ພາຍໃນຄະນະອຳນາດການປົກຄອງແຂວງ, ພະແນກແຜນການເງິນ ອາດສາມາດສຳຮອງ ເງິນສົດໄວ້ ໃນຄັງເງິນສົດ ເພື່ອແກ້ໄຂບັນຫາການຈ່າຍຊ້າ.

**(5) ການກວດກາ**

ຄະນະກຳມະການກວດກາ ບໍ່ໄດ້ໄປກວດກາສະຖານທີ່ໂຄງການຕາມເວລາ, ເຖິງວ່າຈະມີງົບ 2-3 % ຂອງ ມູນຄ່າສັນຍາເພື່ອຈ່າຍສຳລັບວຽກງານດັ່ງກ່າວ. ຄະນະກຳມະການດຳເນີນການກວດກາສະຖານທີ່ໂຄງ ການ ແຕ່ເວລາທີ່ມີການເຊື້ອເຊີນຈາກຜູ້ຮັບເໝົາ. ດັ່ງນັ້ນ, ອາດມີຄວາມສ່ຽງຢູ່ບ່ອນວ່າການກວດກາບໍ່ໄດ້ ດຳເນີນຢ່າງເປັນເອກະລາດ.

**(6) ຄວາມບໍ່ສອດຄ່ອງ ລະຫວ່າງ ການບໍລິຫານງົບປະມານ ແລະ ການເບີກຈ່າຍຕົວຈິງ**

ໃນເວລາ ພະແນກແຜນການ ແລະ ການລົງທຶນ ອອກໃບຢັ້ງຢືນໃຫ້ແກ່ຜູ້ຮັບເໝົາເພື່ອຢັ້ງຢືນໃຫ້ເຂົາເຈົ້າໃນ ການເຮັດໃບສະເໜີຂໍຖອນ ຕໍ່ພະແນກການເງິນ, ພະແນກແຜນການ ແລະ ການລົງທຶນຈະຫັກອອກຈາກ ບັນຊີເລີຍ, ຊຶ່ງຖືວ່າເປັນການຊຳລະ. ແນວໃດກໍຕາມ, ຍ້ອນວ່າ ພະແນກການເງິນ ອາດມີການແກ່ຍາວການ ຊຳລະໄປເຖິງສົກງົບປະມານຖັດໄປ, ມັນຈະເກີດຄວາມບໍ່ສອດຄ່ອງ ລະຫວ່າງ ການບໍລິຫານງົບປະມານ

ແລະ ການເບີກຈ່າຍຕົວຈິງ. ຍ້ອນວ່າ ການຊຳລະໜີ້ທີ່ຍັງຄ້າງບໍ່ໄດ້ມີການຂື້ນແຜນໄວ້, ສະນັ້ນກໍຈະເກີດອັນບໍ່ສອດຄ່ອງຕື່ມອີກ.

## 3. ອື່ນໆ

### (1) ລະບົບພາສີອາກອນ

ພາຍໃຕ້ຂັ້ນຕອນທີ່ມີໃນປະຈຸບັນ, ຜູ້ຮັບເໝົາຕ້ອງໄດ້ຈ່າຍອາກອນ 10%ຂອງມູນຄ່າສັນຍາ, ກ່ອນທີ່ຈະໄດ້ຮັບ ການ ຊຳລະຈາກລັດຖະບານ. ສິ່ງດັ່ງກ່າວນີ້ ຈະເປັນພາລະທາງດ້ານການເງິນອັນໜັກໜ່ວງໃຫ້ແກ່ບໍລິສັດ ໂດຍສະເພາະ ແມ່ນບໍລິສັດຮັບເໝົາຂະໜາດນ້ອຍ. ອາກອນດັ່ງກ່າວສາມາດຕັດເອົາໃນເວລາທີ່ເ ຈົ້າຂອງໂຄງການຊຳລະໃຫ້ເລີຍ.